# ປະຕູໄຊ

## ການກໍ່ສ້າງ ✿ ຄວາມໝາຍ ✿ ກິຕິສັກ



# Victory Arch

## Vientiane



ຮູບປະດັບໂດມປະຕູໄຊ



ປະຕູໄຊຍາມລາຕີ

# ປະຕູໄຊ

## ການກໍ່ສ້າງ ຄວາມໝາຍ ກິຕິສັກ

**ທຳ ໄຊຍະສິດເສນາ**

ຜູ້ລິດຈະນາ



ກຸສົນຜົນບຸນ, ຄຸນຄວາມດີ ແລະສໍລະເສີນໃດໆ
ຫາກຈັກເກີດຈາກໜັງສືເຫຼັ້ມນີ້ ຜູ້ຂ້າຂໍຍົກ
ອຸທິດທອດເຖິງດວງວິນຍານ ຂອງພໍ່ແມ່ຜູ້ບັງເກີດເກົ້າ
ແລະ ຂອງຜູ້ໃຫ້ອຸປະກາລະຄຸນທຸກທ່ານ



ທ່ານ ທຳ ໄຊຍະສິດເສນາ

# ສາລະບານ


ໜ້າ

ຄຳນຳ ກ

ຍານລຳລຶກ 1

ພາກທີ I

ກ. ເຄົ້າມູນຕົ້ນຕໍທີ່ພາໃຫ້ເກີດປະຕູໄຊ 5

ຂ. ຄັດເລືອກຮູບແບບແຜນຜັງກໍ່ສ້າງປະຕູໄຊ 6

ພາກທີ II

ຮູບລັກສະນະ ແລະ ຄວາມໝາຍຂອງປະຕູໄຊ 8

1. ເພດຊີງ 8

2. ຊວດຊີງ 10

3. ການປະດັບປະດາດ້ວຍດອກດວງລວດລາຍ 12

4. ຄວາມໝາຍ ແລະ ປະໂຫຍດທີ່ໃຊ້ 13

ພາກທີ III

ການຈັດຕັ້ງ ແລະ ແຕ່ງຕັ້ງໜ້າທີ່ທາງລາຊະການ ໃນການກໍ່ສ້າງ 18

ແຈ້ງການຂອງກະຊວງກະແຫຼງຂ່າວ ແລະ ວັດທະນະທຳ 23

ພາກທີ IV

ທັດສະນະຂອງຕ່າງປະເທດຕໍ່ປະຕູໄຊ 27

ພາກທີ V

ປະຕູໄຊແມ່ນສິນບັດຂອງທົ່ວປວງຊົນລາວ 31

ປະຕູໄຊຍານນຸສະຕິ 36

# ຄຳນຳ

## ປະຕູໄຊ ! ປະຕູໄຊ !

ຟັງແຕ່ຊື່ກໍ່ສຸດໃຈເອົາໂລດ, ຫຼາຍສິ່ງຫຼາຍຢ່າງ ຫຼື ອາດວ່າທຸກສິ່ງທຸກຢ່າງທີ່ດີເດັ່ນພິສະດານຄືວ່າມີຢູ່ໃນອະນຸສອນສະຖານແຫ່ງນີ້.

ຊື່ *ປະຕູໄຊ* ໄດ້ຍິນແລ້ວຄືວ່າມີອຳນາດສະກົດໃຈໃຫ້ພາກພູມໃຈອກອ້າງ ໃນໄຊຊະນະຜາບແພ້ສັດຕູໝູ່ມານລາບລຽບ, ຄືວ່າເຕືອນໃຫ້ຮູ້ວ່າຊາດລາວເຄີຍມີອຳນາດອິດທິລິດແຜ່ໄພສານໄປທົ່ວຜືນແຜ່ນດິນໃນຊີກໂລກແຫ່ງນີ້.

– ພາໃຫ້ລຳລຶກເຖິງໄຊຊະນະອັນເດັດຂາດກ້ອງໄກ ຂອງພະບາດສົມເດັດພະເຈົ້າຟ້າງຸ່ມມະຫາລາດ ທີ່ເດີນທັບປາບປາມກວາດລ້າງສ້ຽນໜາມ ແລ້ວລວມຜືນແຜ່ນດິນລ້ານຊ້າງໃຫ້ເປັນແຜ່ນດິນດຽວສຳເລັດເສັດສິ້ນ.

– ຊວນໃຫ້ລຳລຶກເຖິງໄຊຊະນະອັນສະຫຼາດແກ່ນກ້າແຫຼມຄົມໃຫຍ່ຍິ່ງດ້ວຍກົນລະຍຸດຊານໄຊ ດ້ານຍຸດທະສິງຄາມ ດ້ານຍຸດໂທບາຍການເມືອງ ການເສດຖະກິດສັງຄົມ ການສຶກສາວັດທະນະທຳ ການສິລະປະສະຖາປັດຕະຍະກຳຫຼາກຫຼາຍອະເນກອະນັນ ຂອງພະບາດສົມເດັດພະເຈົ້າໄຊຍະເຊດຖາມະຫາລາດຜູ້ອົງອາດເລືອງລືດ... ຂອງພະເຈົ້າສຸລິຍະວົງສາມະຫາລາດ ຂອງພະເຈົ້າອານຸ.... ແລະ ອື່ນໆ.

ໃນວັນທີ 2 ທັນວາ 1975 20 ປີຜ່ານມາ, ມະຫາຊົນຊາວວຽງຈັນ ຈຳນວນມະຫາສານຈົນມືດຟ້າມົວດິນໄດ້ຮວມຊຸມນຸມສະເຫຼີມສະຫຼອງໄຊຊະນະມະໂຫລານຢູ່ໃນທີ່ແຫ່ງນີ້ແລະໄດ້ແຫ່ຂະບວນສວນສະໜາມລອດກ້ອງປະຕູໄຊໄປສູ່ເດີ່ນພະທາດຫຼວງ ເພື່ອສະເຫຼີມສະຫຼອງການປະກາດຍຶດອຳນາດທົ່ວປະເທດ ແລະ ສ້າງຕັ້ງສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວຢ່າງຟົດຟື້ນປະຕິວັດ.

ຕົວ *ປະຕູໄຊ* ຊຶ່ງເປັນຮູບປະທຳກໍ່ສ້າງເຫັນແລ້ວກໍ່ຄືວ່າປະເສີດເລີດລອຍຈິງຈັງເອົາແທ້ເອົາວ່າ ບໍ່ແມ່ນແຕ່ສຳລັບຄົນລາວທ່ານັ້ນ ແມ່ນແຕ່ຕ່າງປະເທດກໍຍົກມືກົ້ມຫົວຮັບຮອງວ່າແມ່ນ " ໜຶ່ງບໍ່ມີສອງ " ແລະວ່າແມ່ນ " ລື່ນກາຍບັນດາສະກາປັດ ແລະ ອາຄານອື່ນໆ ໃນລັກສະນະດຽວກັນທີ່ກໍ່ສ້າງມາກ່ອນ ". ຊຶ່ງທຽບຄືດວງມະນີດວງໜຶ່ງທີ່ເອ້ປະດັບປະດາທານີນະຄອນຫຼວງແຫ່ງນີ້ ທັງເຊີດຊູໃຫ້ກຽດອົງອາດເອກອ້າງທະວີຄູນ...

ຄ້າຍຄືວ່າໄຊຊະນະທຸກໄຊຊະນະໃນຍຸດທະສົງຄາມປ້ອງກັນຊາດໃນປະຫວັດສາດຫຼາຍຮ້ອຍປີຜ່ານມາ ຂອງວິລະຊົນຂອງມະຫາວິລະຊົນລາວ ໄດ້ຜ່ານກາຍລອດກ້ອງ *ປະຕູໄຊ* ແຫ່ງນີ້, ໄດ້ສະເຫຼີມສະຫຼອງຢ່າງມະໂຫລານກຶກກ້ອງກຳປະນາ ຢູ່ນະປະຕູໄຊແຫ່ງນີ້. ຈຶ່ງຢາກຂໍອະນຸຍາດຍົກເອົາສຽງຮ້ອງໂຮໄປປີບເຕັມປາກເຕັມຄໍຂອງມະຫາຊົນຊາວລາວໃນວາລະນັ້ນມາໄວ້ນະທີ່ນີ້ອີກຄືສຽງ : " ໂຮະ ໂຮ່ ຮິວ ! ໂຮະ ໂຮ່ ຮິວ ! ໂຮະ ໂຮ່ ຮິວ ! " ເອກະລາດລາວໝັ້ນຍືນ ! " ມູນເຊື້ອຮັກຊາດອັນສູງ

ສິ່ງຂອງບັນພະບຸລຸດລາວຈົ່ງໝັ້ນຍືນ ! " " ປະເທດລາວສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ແລະ ວັດທະນາຖາວອນຈົ່ງໝັ້ນຍືນ ! " ຈັກສາມເທື່ອໃຫ້ເກີງໃຈ.

ບໍ່ໝົດແຕ່ເທົ່ານັ້ນ ໃນໃໝ່ໆນີ້ ເພື່ອສ້າງເສີມເຕີມແຕ່ງໃຫ້ *ປະຕູໄຊ* ມີເອກະລັກສວຍສົດວິຈິດພິດສະດານສະເພາະຕົວ ກະຊວງກະແຫຼງຂ່າວ ແລະ ວັດທະນະທຳໄດ້ອອກກະແຫຼງການ ຕັ້ງຊື່ເປັນທາງການໃຫ້ອະນຸສາວະລີນີ້ວ່າ: *ປະຕູໄຊ* ແລະ ທັງໄດ້ໃຫ້ຊ່າງວິຈິດສິນປັບປຸງ ແຕ່ງແປງດອກດວງບາງບ່ອນ ໃຫ້ງົດງາມກ້າວໜ້າເຂົ້າກັບກາລະສະໄໝໄດ້ດີ, ພາໃຫ້ *ປະຕູໄຊ* ກາຍເປັນຂອງຂວັນເປັນມໍລະດົກແກ່ມະຫາຊົນຊາວລາວ ແລະ ຊາວເທດສືບຕໍ່ໄປຊົ່ວກາລະນານ.

ທີ່ກ່າວມານີ້ລ້ວນແຕ່ສະກິດໃຈໃຫ້ສົນໃຈ ໃຫ້ຢາກຮູ້ ໃຫ້ຢາກເຫັນວ່າ : *ປະຕູໄຊ* ນີ້ ສ້າງຂຶ້ນສະໄໝໃດ ? ສ້າງຂຶ້ນເພື່ອຫຍັງ ? ໃຜເປັນຜູ້ຈິນຕະນາລິເລີ່ມ ອອກແບບແຜນຜັງກໍ່ສ້າງ? ມີຂະໜາດກວ້າງຍາວສູງທໍ່ໃດ? ໃຜເປັນຊ່າງກໍ່ສ້າງ? ໝົດຄ່າກໍ່ສ້າງທໍ່ໃດ? ຕໍ່ປະຕູໄຊນີ້ ຊາວຕ່າງປະເທດຮູ້ສຶກແນວໃດ ? ຊາວລາວຮູ້ສຶກແນວໃດ ?

ໜັງສືນ້ອຍທີ່ທ່ານຜູ້ອ່ານກຳລັງອ່ານຢູ່ໃນມືເວລານີ້ ຈະບອກໃຫ້ທ່ານຮູ້ລາຍລະອຽດຄົບຖ້ວນຕໍ່ຄຳຖາມເຫຼົ່ານັ້ນ.

ສຸດທ້າຍ ຜູ້ຂຽນຂໍຈົດຈຳບໍ່ລືມບຸນຄຸນຂອງພັກລັດທີ່ມີກຽດສູງສົ່ງ ໃນການະເປັນແກນນຳພາຊີວິດຊູຄົນທຸງຊາດ ເອກະລາດ

ແລະ ກ້າວໜ້າຢ່າງອົງອາດຊານໄຊ. ພ້ອມນີ້ກໍຂໍສັນລະເສີນ ແລະຂໍຂອບໃຈທ່ານຄຳເສັງ ສູນດາລາ ຫົວໜ້າກົມພິມຈຳໜ່າຍ ຫໍສະໝຸດແລະປ້າຍ ແລະມື້ລາງ ທ່ານບຸນເຮັງ ບົວສີແສງປະເສີດ ວ່າການຫົວໜ້າກົມພິພິດທະພັນ ແລະ ວັດຖຸບູຮານ ຜູ້ມີສ່ວນປະກອບໃຫ້ໜັງສືເຫຼັ້ມນີ້ມີສີສັນຊີວິດຊີວາ ເຂົ້າກັບກາລະສະໄໝ ແລະ ໄດ້ຮັບອະນຸຍາດໃຫ້ພິມເຜີຍແຜ່ ເພື່ອຮັບໃຊ້ສັງຄົມຜູ້ສົນໃຈສະແຫວງຫາຂໍ້ມູນຄວາມຈິງໃຫ້ໄດ້ຮັບປະໂຫຍດທົ່ວກັນ.

ວັນທີ 3 ທັນວາ 1995

ທ່ານ ທຳ ໄຊຍະສິດເສນາ

ທາດກໍ່ສ້າງຢູ່ນະຄອນຫລວງລາວ, ສ້າງສູ່
ແດນູ່ເພື່ອບົດສຸດຂີດສາຫານ.
ເດີມແປ້ນສັນລອຍຈິດວິນຍານຂອງນັກ
ສູ້ຜູ້ເສຍຊີວິດເພື່ອຊາດ, ແລະເພື່ອສະແດງ
ຄວາມກະຕັນຍູຕໍ່ຜູ້ມີຄຸນຕໍ່ຊາດ.
ມອບໃຫ້ ເປັນສົມບັດຂອງຫໍສະໝຸດ ສີລາ
ວີຣະວົງສ໌ - 26/12/2004

ທຳ ໄຊຍະສິດເສນາ.

# ອະນຸສາວະລີປະຕູໄຊ

## ຍານລຳລຶກ
## ຄວາມພາກພູມໃຈອີ່ງອາດເອກອ້າງ

ມື້ໜຶ່ງຜູ້ຂຽນຢືນຢູ່ລະບຽງດ້ານໜ້າ ຂອງກະຊວງຍຸດຕິທຳ, ລໍພົບທ່ານ ອາທິໄອຍະການປະຊາຊົນສູງສຸດ, ຫຼຽວລົງສູ່ກະໜົນດ້ານໜ້າຕໍ່ໃສ່ອະນຸສາວະລີ " ປະຕູໄຊ " ເຫັນລົດບັດ 10 ຄັນແລ່ນມາຈອດຕໍ່ທ້າຍກັນຈົນສຸດກະໜົນ ຮູ້ໄດ້ທັນທີວ່າ ແມ່ນຂະບວນລົດນັກທ່ອງທ່ຽວຂ້າມນ້ຳຂອງມາຈາກປະເທດໄທ.

ຜູ້ໂດຍສານທັງຍິງທັງຊາຍ ບ່າວສາວ ແລະ ຜູ້ໃຫຍ່ລົງຈາກລົດທຸກຄັນຂ້າມກະໜົນມຸ້ງໜ້າສູ່ " ປະຕູໄຊ " ຈຳນວນໜຶ່ງຢູ່ຫົວແຖວ ແລະ ທ້າຍແຖວບໍ່ຟ້າວຂ້າມກະໜົນເພາະຢູ່ບ່ອນນັ້ນມັນແມ່ນມູມຖ່າຍຮູບໄດ້ສິລະປະ ຟ້າວໃຊ້ກອງຖ່າຍຮູບທຳໜ້າທີ່ທັນທີ, ຜູ້ກື້ກອງຖ່າຍວີດີໂອກໍ່ດັ່ງດຽວກັນ. ລົດຄັນໜຶ່ງບັນທຸກໄດ້ 50 ຄົນປະມານໄດ້ວ່າ ນັກທ່ອງທ່ຽວທີ່ລົງຈາກລົດນັ້ນມີປະມານ 500 ຄົນ.

ເມື່ອຂະເຈົ້າແຫງນໜ້າຊົມ " ປະຕູໄຊ " ເຫັນສີ

ໜ້າສົດຊື່ນແຈ່ມໃສເບີກບານ, ສະອອນ, ສະອື້ນທື້ນທວງ, ມີຜູ້ແລ່ນກະໂດດໂລດເຕັ້ນ ມີຊື່ນັ້ນຊື່ນີ້, ຢືນຈູ້ມກັນກ່າຍຮູບໝູ່ ກ່າຍຮູບດ່ຽວ, ກ່າຍວີດີໂອ, ບ່າວສາວຢືນຄູ່ກັນກ່າຍຮູບໃຫ້ໄດ້ " ປະຕູໄຊ " ເປັນສາກຫຼັງ.

ບາງຜ່ອງຢືນຊົມສິລະປະສະຖາປັດດ້ານນອກ ໃບໜ້າທຸກຄົນຊື່ນຊົມຍິ້ມແຍ້ມອີ່ມໃຈທີ່ໄດ້ມາຮອດມາເຖິງ ໄດ້ຈັບໄດ້ບາຍສຳພັດກັບສິ່ງທີ່ນຶກໄຝ່ຝັນເອົາໄວ້ແຕ່ນານ ຄືປະຕູໄຊໃນນະຄອນວຽງຈັນ.

ບາງຜ່ອງພາກັນເຂົ້າສູ່ອຸບມຸງ ຊົມສິລະປະສະຖາປັດຕະຍາກຳລາວ ແລະ ຂຶ້ນຂັ້ນໄດສູ່ຍອດ " ປະຕູໄຊ " ເພື່ອຊົມທິວທັດຂອງນະຄອນວຽງຈັນຈາກເບື້ອງບົນ ອັນສຳຄັນແມ່ນຈະໄດ້ເຫັນພະທາດຫຼວງ ແລະ ທຳຄຳຍ່າງເດັ່ນຊັດ ໂດຍແມ່ນປະຕູໄຊຕັ້ງຢູ່ເຄິ່ງກາງບົນກະໜົນລ້ານຊ້າງ.

ຕໍ່ໜ້າສະພາບທີ່ພົບເຫັນໂດຍບັງເອີນໃນເວລານັ້ນ, ຜູ້ຂຽນຮູ້ສຶກຕື່ນຕັນຕື່ນເຕັ້ນ, ຄ້າຍຄືຈິດໃຈຂອງຕົນໄດ້ສວມຢູ່ໃນຮ່າງຂອງນັກທ່ອງທ່ຽວເຫຼົ່ານັ້ນ. ຫ້າຮ້ອຍຄົນຮູ້ສຶກແນວໃດ, ຕົນເອງກໍ່ຄືວ່າຮູ້ສຶກແນວນັ້ນ ດັ່ງດຽວກັນກັບຂະເຈົ້າ. ຄວາມຮູ້ສຶກຂອງຫ້າຮ້ອຍຄົນເຂົ້າມາຈຸ້ມສຸມໃນດວງໃຈຂອງຂ້າ ພາໃຫ້ມີຊີວິດຊີວາຊື່ນຊົມເບີກບານ, ເປັນກຳໄລຊີວິດຈິງຈັງເລີກແລບທະວີຄູນ.

ເໜືອກວ່ານັ້ນຄື : ຜູ້ຂຽນ ທັງເປັນເຈົ້າການລິເລີ່ມຈິນຕະນາອອກຄວາມຄິດ, ອອກແບບແຜນຜັງຄວບຄຸມການກໍ່ສ້າງ

ຍິ່ງມີຄວາມຮູ້ສຶກສູງຊື້ງລະອຽດອະເໜກອະນັນຫຼາຍກວ່ານັກທ່ອງທ່ຽວເຫຼົ່ານັ້ນ ຄືຮູ້ສຶກພາກພູມໃຈ ຮູ້ສຶກພໍໃຈອີ່ມເອີບໃນຜົນງານທີ່ຕົນສ້າງໄວ້ເປັນມໍລະດົກສືບທອດປະດັບຊາດຕໍ່ໄປ.

ລະອຽດເລິກກວ່ານັ້ນອີກຄື : ໃນທາງຈິຕະວິທະຍາທານ " ປະຕູໄຊ " ໄດ້ກາຍເກີດເປັນອາຫານຈິດເຍື່ອງໜຶ່ງທີ່ປ້ອນຊຸບລ້ຽງຈິດວິນຍານຂອງນັກທ່ອງທ່ຽວ ແລະ ຜູ້ຊົມໃຫ້ ເບີກບານມ່ວນຊື່ນແຈ່ມໃສມີຄວາມສຸກ. ອັນຄວາມສຸກນີ້ ແມ່ນຄວາມສຸກທີ່ບໍລິສຸດຂາວສະອາດສູງສົ່ງໂດຍທຳມະຊາດ. ຄວາມສຸກແມ່ນກົງກັນຂ້າມກັບຄວາມທຸກທີ່ຄົນປາດຖະໜາຫຼີກເວັ້ນ. ເມື່ອ " ປະຕູໄຊ " ໃຫ້ຄວາມສຸກກໍ່ຄືໃຫ້ກຸສົນເບີກບານຊາບຊຶ້ງ, ຮັບໃຊ້ໃຫ້ປະໂຫຍດແກ່ມະນຸດ, ເປັນກຸສົນລະອຽດອາຣະຍະສູງທີ່ອຸທິດຍໍຍົກໃຫ້ໂດຍຜູ້ຮັບບໍ່ຮູ້ສຶກຕົວ, ແມ່ນການສ້າງປະໂຫຍດສຸກຄຸນທຳແກ່ເພື່ອນມະນຸດທີ່ເກີດແກ່ເຈັບຕາຍດ້ວຍກັນ.

ຈຶ່ງຂໍເຊີນ ທ່ານຜູ້ອ່ານທຸກຄົນໂມທະນາສາທຸໃນກອງກຸສົນກອງນີ້ລວມກັນເພາະ " ປະຕູໄຊ " ເປັນຂອງທ່ານ ເປັນຂອງຄົນລາວແລ້ວທຸກຄົນ.

ຜູ້ເປັນເຈົ້າການທີ່ມີຈິນຕະນາອອກແບບ ແລະ ຮ່ວມກໍ່ສ້າງອະນຸສອນສະຖານແຫ່ງນີ້ ກໍ່ຮູ້ສຶກຄ້ອຍຕາມໄປ. ຕົນໄດ້ສ້າງຄວາມສຸກແກ່ຜູ້ອື່ນແລ້ວ, ຍິ່ງຊົມຊື່ນພໍໃຈອີ່ມເອີບ, ອີກທັງພາກພູມອວດອົ່ງທະນົງໃຈທີ່ໄດ້ສ້າງຜົນງານອັນລ້ຳເລີດເປັນກຽດສັກສີປະດັບປະດາ ທັງຍົດກຽດ ແລະ ຖານະຂອງນະຄອນຫຼວງລາວໃຫ້ສູງເດັ່ນທັນທຽມກັບນານາອາຣະຍະນະຄອນ, ບໍ່

ນ້ອຍໜ້າຕ່ຳຕາຕ່ຳທານີໃດໃນໂລກ. ຄວາມຮູ້ສຶກນີ້ຍິ່ງເຊີດໜ້າຊູໃຈຍົກສູງຄວາມຕື້ນຕັນ ເມື່ອຜູ້ສ້າງບໍ່ປາກະໜາສິ່ງໃດຕອບແທນ. ພຽງແຕ່ຄວາມສຳເລັດນັ້ນໄດ້ສ້າງປະໂຫຍດສຸກສ່ວນໃດສ່ວນໜຶ່ງແລ້ວແກ່ສັງຄົມເທົ່ານັ້ນກໍ່ພໍໃຈ.

ຢຸຕິກາບັ້ນ　　　ບູຊາຍານລຳລຶກ
ແລ້ວທໍ່ນີ້　　　ຫວນຮູ້ຮ່ອມນຳ ວ່າມ່າ

❀ ✪ ❀

# ພາກທີ I
## ກ. ເຄົ້າມູນຕົ້ນຕໍທີ່ພາໃຫ້ເກີດ " ປະຕູໄຊ "

" ປະຕູໄຊ " ກໍາເນີດມາໄດ້ 35 ປີ ຍາວນານພໍສົມຄວນ ແຕ່ການກໍ່ສ້າງຍັງບໍ່ທັນສໍາເລັດແລ້ວບໍລິບູນດີທຸກຢ່າງຍ້ອນການຜັນຜວນຂອງສັງຄົມແວດລ້ອມ.

ຈະຢ່າງໃດກໍ່ຕາມ ເພື່ອສ້າງກໍາລັງໃຈ ແລະ ກໍາລັງສັດທາໃຫ້ແກ່ຜູ້ປະສົງດີ ແລະ ມອງການໄກກ່ຽວກັບປະຕູໄຊນີ້ສົມຄວນຈະໄດ້ຮູ້ປະຫວັດການຈິນຕະນາລິເລີ່ມເບີກທາງໃຫ້ແກ່ການກໍ່ສ້າງປະຕູໄຊນີ້ ເພາະເຫດຕົ້ນຕໍຂອງການລິເລີ່ມ ລ້ວນແຕ່ແມ່ນມູນເຫດອັນບໍລິສຸດສະອາດສູງສົ່ງຂອງຊົນອະລິຍະຊົນ, ຊຶ່ງມີແບບຢ່າງມາແລ້ວແຕ່ດຶກດໍາບັນໃນຫຼາຍຍຸກຫຼາຍສະໄໝ ໃນຫຼາຍປະເທດທີ່ມີອະລະຍະທໍາສູງສີວິໄລ.

ໄດ້ສ້າງອະນຸສາວະລີ ພະບາດສົມເດັດພະເຈົ້າໄຊເຊດຖາມະຫາລາດສໍາເລັດແລ້ວເມື່ອບໍ່ນານມານີ້. ຈິດໃຈຈິນຕະນາຍານພື້ນຖານທີ່ບັນດານໃຫ້ສ້າງອະນຸສາວະລີ ພະບາດສົມເດັດພະເຈົ້າໄຊເຊດຖາມະຫາລາດບໍ່ໄດ້ສິ້ນສຸດຢຸດຕິລົງ ຍັງສືບຕໍ່ກໍ່ຕົວຂຶ້ນອີກ ເພື່ອລໍາລຶກເຖິງບຸນຄຸນຂອງຜູ້ມີຄຸນອື່ນໆອີກມາກມາຍອະເນກອະນັນ, ເພື່ອຈະໄດ້ຕອບບຸນແທນຄຸນ, ຂອບອົກຂອບໃຈ, ຄາລະວະບູຊາ ແລະ ເທີດທູນກຽດສັກສີອັນສູງສົ່ງຂອງບັນດາວີຣະມະຫາຊົນເຫຼົ່ານັ້ນໄວ້ໃນທີ່ສູງ ບໍ່ໃຫ້ຫຼົງລືມ, ເປັນຕົ້ນກໍ່ຄື :

ພະເຈົ້າຂຸນ ອ້າຍລາວລາຊາທິລາດ ພະເຈົ້າຂຸນບູລົມ ລາຊາມະຫາລາດ ພະເຈົ້າຟ້າງຸ່ມ ມະຫາລາດ ພະເຈົ້າສາມແສນໄທ ພະເຈົ້າສຸລິຍະວົງສາ ເຈົ້າອານຸ ເຈົ້າອຸປະລາດ ເຈົ້າລາດຊະວົງ ບັນດານັກກູ້ຊາດ ກູ້ເອກະລາດ ບັນດາລັດທະກອນປະຊາຊົນຜູ້ໄດ້ທຳຄຸນງາມຄວາມດີ ແລະ ສະລະຊີວິດເພື່ອການຢູ່ລອດຂອງຊາດລາວນັ້ນ, ກໍ່ຄວນທີ່ຈະໄດ້ມີອະນຸສອນສະຖານໝັ້ນຄົງໄວ້ ເພື່ອເປັນທີ່ລະລຶກ ແລະ ປະກອບພິທີຕ່າງໆສະແດງຄວາມກະຕັນຍູກະຕະເວທີ ເຊີດຊູເອົາໄວ້ເປັນແບບຢ່າງຊີ້ນຳ, ເປັນກຳລັງໃຈ ແກ່ບັນພະຊົນຮຸ່ນຫຼັງເພື່ອປ້ອງກັນຮັກສາຊາດໄວ້ໃຫ້ໝັ້ນຄົງສືບໄປ.

## ຂ. ຄັດເລືອກຮູບແບບແຜນຜັງກໍ່ສ້າງປະຕູໄຊ

ມີດຳລັດນາຍົກລັດຖະມົນຕີສະບັບໜຶ່ງ ແຕ່ງຕັ້ງຄະນະກຳມະການຂຶ້ນຄະນະໜຶ່ງ ຈັດການຮຽກປະກວດແຂ່ງຂັນຄັດເລືອກເອົາຮູບແບບອະນຸສາວະລີຮູບໜຶ່ງທີ່ງົດງາມເໝາະສົມ ມີຄວາມໝາຍ ເພື່ອສ້າງເປັນອະນຸສອນສະຖານແກ່ວິລະຊົນ ມະຫາວິລະຊົນ.

ຄຳສັ່ງລາດຊະການເລກທີ່ 0624/ ກສກ /41 ລົງວັນທີ 26–2–1957: ເລື່ອງໃຫ້ສະເໜີຮູບແບບອະນຸສາວະລີ ໂດຍມີການປະກວດແຂ່ງຂັນຊີງລາງວັນ ( ໄດ້ຕັ້ງລາງວັນຊະນະເລີດໄວ້ສາມສິບພັນກີບ ), ອອກເຜີຍແຜ່ທົ່ວໄປ.

ຮອດເວລາກຳນົດໄວ້, ຮູບແບບແຜນຜັງອະນຸສາວະລີ, ເປັນຮູບແຕ້ມ ແລະ ຮູບຫຸ່ນຈຳລອງຈາກຫຼາຍສະຖາບັນທົ່ວພະລາຊະອານາຈັກ, ມີທັງຂອງພະບໍຣິມມະຫາລາຊະວັງຫຼວງພະບາງ, ຂອງກົມໂຍທາພິມລະເຮືອນ, ຂອງກົມເຄຫາສະຖານ, ຂອງກົມກໍ່ສ້າງເຄຫາສະຖານ ແລະ ຂອງບັນດານາຍຊ່າງມະຫາຊົນ.... ແລະກົມທະຫານ, ກໍ່ໄດ້ມາຕັ້ງລຽນກັນໄວ້ໃນຫ້ອງປະຊຸມຂອງຄະນະກຳມະການ.

ວັນເວລາອັນລະທຶກໃຈ ຂອງການກວດກາພິຈາລະນາຕັດສິນໂດຍຄະນະກຳມະການປະກວດມາຮອດໃນທີ່ສຸດ. ຜົນປະກາດເປີດເຜີຍຈະແຈ້ງອອກວ່າ : ຮູບແບບແຜນຜັງ ແລະ ຫຸ່ນຈຳລອງອະນຸສາວະລີສະເໜີໂດຍ ທ້າວ ທຳ ໄຊຍະສິດເສນາ ຜູ້ບັນຊາການກົມຍຸດທະສັນພາວຸດ ໄດ້ຮັບຄະແນນຊະນະເລີດຢ່າງຂາດລອຍ.

ໄຊຊະນະເລີດຄັ້ງນີ້ ແມ່ນມະຕິມະຫາຊົນ, ຊຶ່ງມີຄະນະກຳມະການຜູ້ຊົງຄຸນນາວຸດອາວຸໂສແຕ່ງຕັ້ງເປັນທາງການ, ເປັນຜູ້ຕັດສິນຊີ້ຂາດຍໍຍົກໃຫ້ຢ່າງບໍລິສຸດເປີດເຜີຍ ແລະ ສະຫວ່າຜ່າເຜີຍ.

# ພາກທີ II

## ຮູບລັກສະນະແລະຄວາມໝາຍຂອງປະຕູໄຊ

ຮູບແບບ ແລະ ຮູບທຸ່ນຈຳລອງທີ່ໄດ້ຄະແນນຊະນະເລີດໃນຄັ້ງນີ້ ມີລັກສະນະ ແລະ ຄວາມໝາຍເປັນຂໍ້ມູນພື້ນຖານແບ່ງອອກເປັນສີ່ຂໍ້ຄື :

1. ເພດຊີວ = ເພດໃດ – ຊີວໃດ – ຮູບ ( ສັນຖານ ) ໃດອັນເປັນຂອງລາວ ແລະ ສາກົນບວກເຂົ້າກັນປະປຸກກ້າວໜ້າທັນສະໄໝ.
2. ຊວດຊີວ = ສູດຕຳລາທີ່ໃຊ້ໃນການຄຳນວນໃຫ້ໄດ້ສັດສ່ວນແລະໄດ້ຄວາມສັກສິດເຂັດຢຳ ( ບັນເຈີດ ).
3. ການປະດັບປະດາດ້ວຍລາຍດອກລວດລາຍ ອັນເປັນສິລະປະລາວ ( ເອກະລັກ ).
4. ຄວາມໝາຍ ແລະ ປະໂຫຍດທີ່ໃຊ້ເປັນພື້ນ(ສັນຍາລັກ). ແຕ່ລະຂໍ້ດອະທິບາຍລະອຽດດັ່ງນີ້ :

## 1. ເພດຊີວ

ອະນຸສາວະລີ ມີເພດຊີວເປັນຮູບປະຕູໄຊ ( ຄ້າຍຄືປະຕູໄຊ ຢູ່ກຸງປາຣີ – ອ້າກເດີຕຣີອ້ອມຟ ). ມີປະຕູໄຊ 4 ດ້ານ ( ເໜືອ – ໃຕ້ – ຕາເວັນອອກ – ຕາເວັນຕົກ ) ດ້ານລະໜຶ່ງປ່ອງບິນໜ້າພຽງຮູບສີ່ຫຼ່ຽມມົນທົນຈະຕຸລັດ. ຢູ່ວົງງຈັນ

ມີປະຕູໄຊສີ່ປ່ອງ – ຢູ່ປາຣີມີປະຕູໄຊສອງປ່ອງ. ຕົວອະນຸສາວະລີເປັນຮູບທາດສີ່ຫຼ່ຽມສູງຂຶ້ນຕາມຄວາມສູງຂອງປະຕູໄຊ. ຫຼັງຄາເປັນຍອດຊໍ່ຟ້າຫ້າຍອດ ຮູບດຽວກັນ ຍອດກາງສູງກວ່າໝູ່, ອີກສີ່ຍອດຢູ່ແຈຂອກຕ່ຳທໍ່ກັນ, (ຄ້າຍຄືຍອດຊໍ່ຟ້າຂອງວັງ " ຕາດສະມາຮາມ " ຫີນອ່ອນສີຂາວຢູ່ນະຄອນນິວແດນລີ ປະເທດອິນເດຍ ). ຢູ່ສີ່ແຈບົນດີນດ້ານນອກມີສະນ້ຳເປັນຮູບດອກບົວບູຊາແຈລະໜຶ່ງສະ ມີຮູບພະຍານາກຍໍຫົວອ້າປາກພູ່ນ້ຳແຈລະໜຶ່ງຕົວ, ນັ້ນແມ່ນເພດຊັ້ນດ້ານນອກ ຊຶ່ງມີສະໜາມເປັນສວນກວ້າງປູກຫຍ້າ ແລະ ດອກໄມ້ປະດັບອ້ອມຮອບສວຍງາມ. ດ້ານໃນຢູ່ກະໂຕໃຈກາງຂອງຈະຕຸລັດບົນດິນມີຮູປ່ອງສຳລັບ ຈຸດແປວໄຟແກັດສເປັນອະນຸສອນສົມມຸດ ຂອງດວງວິນຍານຂອງວິລະຊົນນິລະນາມ ( ດັ່ງດຽວກັບອາຣິຍະສາກົນ ). ດ້ານເທິງເປັນຮູບອຸມົງສູງເດັ່ນໂຄ້ງມົນເຄື່ອງໝ່ວຍໄຂປະດັບຮູບດອກດວງວິຈິດງົດງາມນາໆຊະນິດ. ຢູ່ສີ່ແຈມີຂັ້ນໄດຂຶ້ນຊັ້ນເທິງ, ສອງແຈກົງກັນຂ້າມກັນເປັນຂັ້ນໄດຄອນກຼີດເປັນຂັ້ນທຳມະດາ ເພື່ອໃຫ້ຄົນຍ່າງຂຶ້ນຮອດຊັ້ນສາມ, ອີກສອງແຈກົງກັນຂ້າມກັນເປັນຂັ້ນໄດອູ່ໄຟຟ້າທັນສະໄໝ, ເລື່ອນຂຶ້ນເລື່ອນລົງດ້ວຍເຄື່ອງຈັກໄຟຟ້າ. ( ຄົນບໍ່ຕ້ອງຍ່າງຂຶ້ນຍ່າງລົງ ແມ່ນອູ່ໄຟຟ້າພາຂຶ້ນພາລົງ, ບໍ່ຕ້ອງເມື່ອຍແຄ່ງເມື່ອຍຂາ ). ທັງໝົດແບ່ງເປັນສາມຊັ້ນ – ຊັ້ນທີໜຶ່ງ, ຊັ້ນທີສອງ ແລະ ຊັ້ນທີສາມທີ່ເປັນຫຼັງຄາມີຍອດຊໍ່ຟ້າຫ້າຊໍ່ຕັ້ງຢູ່. ໃນຊໍ່ຟ້າກາງທີ່ໃຫຍ່ແລະສູງກວ່າໝູ່ມີທໍ່ຄອຍຕິດຕັ້ງກ້ອງຊ່ອງທາງໄກໃຊ້ຊົມທິວທັດຮອບດ້ານຂອງນະຄອນວຽງຈັນ.

# 2. ຊວດຊີ້ວ

ໄດ້ຄົ້ນຄວ້າຊອກຫາສູດຫາຕໍາລາ, ທັງໃຊ້ສະຕິປັນຍາຈິນຕະນາພອນສະຫວັນ, ເພື່ອໃຫ້ອະນຸສາວະລີມີຂະໜາດ, ມີສັດສ່ວນ, ສົມສ່ວນ, ມີຊວດຊີ້ວສວຍງາມ, ກໍ່ກຕ້ອງຕາມສະໂຫຼກຂອງໂຫລາສາດ ທີ່ມີສູດມີຕໍາລາ, ອັນຈະພາໃຫ້ອະນຸສາວະລີມີຄວາມສັກສິດ ເຂັດຢໍາເກງຂາມ, ເປັນຂອງຂວັນທີ່ຈະໄດ້ຮັບຄວາມນິຍົມຊົມຊອບຊື່ນຊົມຍິນດີ, ຍ້ອງຍໍສໍລະເສີນກວ້າງຂວາງແຜ່ໄພສານ.

ໄດ້ພົບສູດຕໍາລາໜຶ່ງໃຊ້ເລກສາມຕົວຄື : 3–7–8,

ເລກ 3 ໝາຍເຖິງແກ້ວ 3 ປະການຂອງພຸດທະສາສະໜາອັນໄດ້ແກ່ :

- ☞ ອໍານາດພະພຸດ
- ☞ ອໍານາດພະທໍາ
- ☞ ອໍານາດພະສົງ

ເລກ 7 ແມ່ນ 7 ວັນທີ່ໝູນວຽນເປັນວົງຈອນປິດໃນຮອບ 1 ອາທິດຄື : ວັນທິດ, ວັນຈັນ, ວັນຄານ, ວັນພຸດວັນພະຫັດ, ວັນສຸກ ແລະ ວັນເສົາ. ວົງຈອນປິດວົງນີ້ໄດ້ໝູນວຽນຢູ່ຢ່າງນີ້ເປັນອໍາມະຕະບໍ່ປ່ຽນແປງໃນຈັກກະວານ ຕັ້ງແຕ່ເກີດມີຈັກກະວານ ກໍ່ໄດ້ວ່າເປັນສິ່ງໝັ້ນຄົງກາວອນ ຕະຫຼອດການເປັນອໍາມະຕະ.

ເລກ 8 ໝາຍເຖິງ 8 ທິດຄື : ທິດເໜືອ, ທິດຕາເວັນອອກ, ທິດໃຕ້, ທິດຕາເວັນຕົກ, ທິດຕາເວັນອອກສ່ຽງເໜືອ, ທິດຕາເວັນອອກສ່ຽງໃຕ້, ທິດຕາເວັນຕົກສ່ຽງເໜືອ, ທິດຕາເວັນຕົກສ່ຽງໃຕ້ – ເພື່ອປ້ອງກັນອັນຕະລາຍຈາກ 8 ທິດ ແລະ ເພື່ອເປັ່ງລັດສະໝີລັງສີອຳນາດອິທິພົນອອກສູ່ 8 ທິດ.

ອີກປະການໜຶ່ງ ເລກ 8 ຍັງໝາຍເອົາສິນ 8 ໃນທາງພຸດທະສາສະໜາອັນໝາຍເອົາເສັ້ນທາງເປັນກາງ ໃນການດຳລົງຊີວິດ, ຄືຢູ່ລະຫວ່າງກາງຂອງສິນ 5 ແລະ ສິນ 227. ຢູ່ກາງຢູ່ພໍດີບພໍດີ.

ການໝູນໃຊ້ເລກ 3 ຕົວດັ່ງກ່າວໃຫ້ເກີດຜົນໄດ້ວາງເປັນສູດເປັນຕຳລາດັ່ງນີ້ຄື :

- ທາງກວ້າງແຕ່ລະດ້ານ ຂອງອານຸສາວະລີມີ 24 ແມັດ (3 × 8 ໄດ້ຜົນ 24 ) ເປັນຮູບຈະຕຸລັດສີ່ຫຼ່ຽມມົນທົນ 24 × 24.
- ທາງສູງແຕ່ດິນຂຶ້ນຫາຍອດຊໍ່ຟ້າສູງສຸດມີ 49 ແມັດ ( 7 × 7 ໄດ້ຜົນ 49 ).

ເຫັນໄດ້ວ່າຕຶນອະນຸສາວະລີນີ້ມີຮູບ 4 ຫຼ່ຽມມົນທົນອັນເປັນເອກະລັກພື້ນຖານຂອງສະຖາປັດຕະຍະກຳເພດຊີງລາວແທ້. ຕົວຢ່າງຄື : ພະທາດຫຼວງ, ພະທາດພະນົມ, ພະທາດອິງຮັງ, ພະທາດສີໂຄດຕະບູນ, ພະທາດພູສີ, ພະທາດສີສອງຮັກ, ພະທາດບັງພວນ.... ລ້ວນແຕ່ມີຮູບ 4 ຫຼ່ຽມມົນທົນແບບລາວແທ້ໂດຍທີ່ແມ່ນລາວເປັນຜູ້ສ້າງໄວ້. ຕ່າງຈາກຮູບພະທາດນະຄອນ

ປະກົມເຈດີຂອງໄທ, ພະທາດຢ້າງກຸ້ງຂອງພະມ້າ ແລະ ອື່ນໆ ຊຶ່ງລ້ວນແຕ່ມີຮູບເປັນວົງມົນທັງນັ້ນ.

ສະເພາະປະຕູໂຂ່ງ ຫຼື ປະຕູໄຊ 4 ປ່ອງລ່ວງໃສ່ກັນເປັນກາກະບາດແຕ່ລະປ່ອງມີຄວາມກວ້າງ 8 ແມັດ. ເປັນຂາຕັ້ງມະຫືມາສີ່ແຈ ແຕ່ລະຂາກວ້າງ 8 ແມັດມົນທົບ, ມີຄວາມແໜ້ນໜາຄົງທົນພຽງພໍສຳລັບຄ້ຳຮອງຮັບນ້ຳໜັກທັງໝົດ ຂອງຕົວອະນຸສາວະລີ. ສ່ວນປ່ອງປະຕູໄຊກວ້າງ 8 ແມັດກໍ່ແມ່ນພໍດີສຳລັບເວລາມີການເດີນຂະບວນສວນສະໜາມ, ຈັດແຖວຍ່າງລຽນແຖວ, ແຖວລະ 9 ຄົນ, ເດີນຜ່ານລອດກ້ອງປະຕູໄຊ ( ຊຶ່ງການລຽນແຖວ 9 ຄົນກໍ່ແມ່ນແບບສາກົນນິຍົມທຳມະດາ. ນອກຈາກນັ້ນການແບ່ງສັດສ່ວນອື່ນໆ ແມ່ນໄດ້ຈັດແບ່ງຕາມສູດທີ່ເໝາະສົມ ໄດ້ຂະໜາດຊວດຊົງສວຍງາມພໍເໝາະພໍດີ.

## 3. ການປະດັບປະດາດ້ວຍດວງດອກລວດລາຍ.

ໂດຍພື້ນການແລ້ວ ການເອ້ປະດັບດ້ວຍດອກດວງລວດລາຍໃນສ່ວນຕ່າງໆຂອງປະຕູໄຊນັ້ນ, ໄດ້ຈຳກັດຄັດເລືອກເອົາຈຳເພາະດອກດວງລວດລາຍທີ່ເປັນສິລະປະລາວ ທີ່ມີຢູ່ຕາມອະນຸສອນສະຖານເກົ່າແກ່ແຕ່ປາງປະກົມບູລົມ, ເຊັ່ນຈາກພະທາດຫຼວງ, ພະທາດອິງຮັງ, ຈາກວັດວາອາຮາມໃນແຂວງຕ່າງໆທີ່ໄດ້ລອກແບບຮູບໄວ້ໃນປຶ້ມສະໝຸດກະດາດແຂງມັນ.

ຕົວຢ່າງ ກາບບົວໃຫຍ່ທີ່ປະດັບລຽນອ້ອມຕີນຝາຊັ້ນເທິງ

ແມ່ນກອດແບບອອກມາຈາກ ກາບບົວໃຫຍ່ທີ່ອ້ອມຕີນພະທາດຫຼວງສີ່ດ້ານ, ໄດ້ແບບດຽວກັນເປັຍ. ໃບສີທີ່ອ້ອມຢູ່ຊັ້ນເທິງບົນກາບບົວໃຫຍ່ກໍ່ດັ່ງດຽວກັນ ໄດ້ເອົາຈາກໃບສີທີ່ພະທາດຫຼວງ. ສ່ວນດວງດອກລວດລາຍອື່ນທີ່ປະດັບຢູ່ທົ່ວໄປຂໍບໍ່ຈາຍລະໄນ, ຂໍກ່າວແຕ່ວ່າ ແມ່ນສິລະປະສະກຸາປັດແບບລາວລ້ວນທີ່ມີຢູ່ແຕ່ສະໄໝບູລານ. ບາງສ່ວນໄດ້ດັດແກ້ເລັກນ້ອຍເປັນລັກສະນະກ້າວໜ້າປະຢຸກທັນສະໄໝງົດງາມຫຼາຍກວ່າເດີມ. ບໍ່ແມ່ນເອົາມາຈາກຕ່າງປະເທດໃດທັງສິ້ນ ເພາະສິລະປະສະກຸາປັດຕະຍະກຳຂອງລາວມີຢູ່ຢ່າງອຸດົມສົມບູນມາກຫຼາຍ ຈົນກາຍເປັນເມືອງປະຫວັດສາດເປັນເມືອງທ່ອງທ່ຽວເຊັ່ນຫຼວງພະບາງເປັນຕົ້ນ.

## 4. ຄວາມໝາຍ ແລະ ປະໂຫຍດທີ່ໃຊ້.

1. ຈຸດປະສົງ ແລະ ປະໂຫຍດທາດແທ້ທີ່ຈິດວິນຍານໄດ້ຕັ້ງຂຶ້ນໃນເວລາລິເລີ່ມຈົນຕະນາຈະສ້າງອະນຸສອນສະກຸານແຫ່ງນີ້ ກໍ່ແມ່ນເພື່ອເປັນທີ່ລະລຶກ, ເພື່ອສະແດງຄວາມກະຕັນຍູກະຕະເວທີຕອບບຸນແທນຄຸນ ແລະ ທັງເຊີດຊູບູຊາດວງວິນຍານຂອງວິລະບຸລຸດ ແລະ ວິລະຊົນຂອງຊາດທຸກຍຸກທຸກສະໄໝ, ໄວ້ເປັນແບບຢ່າງອັນສູງສົ່ງ. ແຕ່ດວງວິນຍານເປັນສິ່ງຈັບບໍ່ໄດ້, ເບິ່ງບໍ່ເຫັນຈຶ່ງໄດ້ສົມມຸດເອົາແປວໄຟທີ່ໃສສ່ອງຂາວສະອາດລັບລູ່ລັບແລເປັນຄືຕົວແທນຂອງດວງວິນຍານໃຫ້ເຫັນປະຈັກຕາ ເປັນຮູບປະທຳ. ເວລາປະກອບພິທີເຄົາລົບບູຊາຕອບແທນບຸນຄຸນ ກໍ່ຄ້າຍຄືວ່າດວງວິນຍານປະກົດຢູ່ຕໍ່ຕາ, ຄ້າຍຄືເຫັນແວບວັບລັບລອຍຢູ່ໃນດວງໄຟໃສສ່ອງຊ່ວງບາງຈາງອ່ອນນັ້ນ.

ສະນັ້ນຈຶ່ງປາກກ່າວວ່າ ຈິດວິນຍານ ແລະ ໝາກຫົວໃຈແທ້ຂອງວັດຖຸປະສົງຂອງ " ປະຕູໄຊ " ນັ້ນແມ່ນຂຶ້ນຢູ່ກັບບ່ອນທີ່ວ່າ " ແປວໄຟ" ນີ້ຫຼາຍກວ່າບ່ອນອື່ນໆທີ່ເປັນວັດຖຸຕົວຕົນປະກອບ ແລະ ປະດັບປະດາ... ( ເວລານີ້ " ແປວໄຟ "ທີ່ວ່າຍັງບໍ່ທັນສ້າງສຳເລັດ ).

2 ມີປ່ອງ " ປະຕູໄຊ " 4 ປ່ອງ. ປ່ອງໜຶ່ງຫັນໜ້າໄປທາງທິດຕາເວັນອອກ, ອີກປ່ອງໜຶ່ງຫັນໄປທາງທິດຕາເວັນຕົກ ລ່ວງໃສ່ລວງຍາວຂອງກະໜົນລ້ານຊ້າງ, ເປັນປ່ອງປະຕູໄຊ ທີ່ໃຊ້ສຳລັບໃຫ້ແຖວຂະບວນສວນສະໜາມເດີນລອດກ້ອງ, ຈາກປ່ອງຕາເວັນອອກສູ່ປ່ອງຕາເວັນຕົກຢ່າງອົງອາດມີໄຊ ໃນວັນສຳຄັນຂອງຊາດ, ປ່ອງທີ່ສາມຫັນໄປທາງທິດເໜືອ, ປ່ອງທີ່ສີ່ຫັນໄປທາງທິດໃຕ້.

3. ຕໍ່ຈາກ 4 ມູມທີ່ເປັນແຈດ້ານນອກ ແຕ່ລະແຈມີສະນ້ຳສ້າງເປັນຮູບດອກບົວຈູມມີຂອບສູງ, ປາຍດອກບົວແຫຼມຊີ້ອອກນອກ. ຕິດຢູ່ກັບມູມແຈແຕ່ລະມູມມີຮູບພະຍານາກຊູຫົວອົງອາດ ຫ້າວຫັນ ງົດງາມ, ຍົກຫອນຊີ້ຟ້າ, ອ້າປາກ, ພູ່ນ້ຳເປັນນິດນິລັນ. ຕົວພະຍານາກແມ່ນຕົວພະລາຊາແຫ່ງນາກສົມມຸດ, ເປັນເຄື່ອງໝາຍອັນໜຶ່ງຂອງຊາດລາວ . ນ້ຳທີ່ພູ່ອອກເປັນນິດນິລັນຈາກປາກພະຍານາກແມ່ນໝາຍເກີງກະໂຕເຊື້ອນານາຊີວິດໃນໂລກຈັກກະວານ

ແມ່ນຄວາມຊຸ່ມເຢັນມີຊີວິດອຸດົມສົມບູນຂອງພືດພັນທັນຍາຫານ ແລະ ມະນຸດສັດ, ແມ່ນຄວາມຢູ່ເຢັນເປັນສຸກ. ສ່ວນສະນ້ຳທີ່ເປັນຮູບດອກບົວຈູມນັ້ນ ແມ່ນເປັນດວງດອກໄມ້ເລີດພັນ, ຍໍຍົກໄວ້ບູຊາຄາລະວະເປັນນິດນິລັນແກ່ດວງວິນຍານຂອງວິລະຊົນ, ມະຫາວິລະຊົນລາວຜູ້ເລີດເລີມີບຸນຄຸນອະເໜກອະນັນຕໍ່ຊາດລາວ.

4. ແຕ່ລະ 4 ມູມຂອງຝາດ້ານນອກ ມີດອກໄມ້ປະດັບເປັນຮູບວັນແລນ, ແລນຕິດມູມຝາດ້ານລະອັນ ຈາກຕີນຝາຮອດປາຍຝາສຸດ ປະຊ່ອງວ່າງໄວ້ສອງຂ້າງ. ຊ່ອງວ່າງນັ້ນມີໄວ້ສຳລັບເປັນບ່ອນຕິດດອກໄຟຟ້າ ປະດັບຍາມລາຕີໃນວັນພິທີບຸນສະເຫຼີມສະຫຼອງສຳຄັນຕ່າງໆ.

5. ມີຂັ້ນໄດຄອນກີດ 2 ຂັ້ນໄດເພື່ອປະໂຫຍດແກ່ຜູ້ແຂງແຮງປະສົງຈະຍ່າງຂຶ້ນຊັ້ນເທິງດ້ວຍຂາຕົວເອງ, ຄ່ອຍຂຶ້ນຄ່ອຍຊົມສິລະປະສ່ວນຕ່າງໆຂອງແຕ່ລະຊັ້ນ.

ມີຂັ້ນໄດທີ່ເປັນອູ່ໄຟຟ້າ (ລີຟທ) ຢູ່ຄົນລະແຈກົງກັນຂ້າມ ເພື່ອປະໂຫຍດແກ່ຜູ້ຕ້ອງການຂຶ້ນໄວ, ບໍ່ເມື່ອຍຂາ, ບໍ່ຕ້ອງຍ່າງຂຶ້ນ, ( ຍັງບໍ່ທັນສ້າງສຳເລັດ ).

6. ຂຶ້ນຂັ້ນໄດໄປຮອດຊັ້ນ 1. ຊັ້ນ 1 ນີ້ແມ່ນໃຊ້ປະໂຫຍດເພື່ອເປັນຫ້ອງການຮັບໃຊ້ບໍລິການຮັບແຂກທົ່ວໄປ, ເປັນບ່ອນເຮັດການຂອງຄະນະຮັບຜິດຊອບຄຸ້ມຄອງປົກປ້ອງ ຮັກສາຄວາມເປັນລະບຽບປອດໄພ, ອະນຸລັກບົວແປງ ອະນາໄມ. ເປັນບ່ອນວາງສະແດງເຄື່ອງວັດຖຸບູຮານ, ເຄື່ອງທີ

ລະນຶກ ເຄື່ອງສິນຄ້າອັນເໝາະສົມມີວັດທະນະທຳ, ເຄື່ອງດື່ມກິນເປັນຍາມຫິວນ້ຳ....

ຂຶ້ນຕໍ່ໄປຮອດຊັ້ນ2 ກໍ່ເປັນບ່ອນສຳຄັນສູງຍິ່ງອີກບ່ອນໜຶ່ງ, ໝາຍໝັ້ນໃຫ້ເປັນຫໍພິພິດທະພັນວິລະບູລຸດ ແລະ ວິລະຊົນໃນທຸກຍຸກທຸກສະໄໝ, ມີຮູບປັ້ນຮູບແຕ້ມຂອງວິລະມະຫາກະສັດອົງເອກ, ຂອງມະຫາວິລະຊົນ, ຂອງມະຫາບູລຸດລາວຜູ້ຊຶ່ງມະຫາຊົນລາວຍອມຮັບນັບຖື, ມີເຄື່ອງທີ່ລະລຶກໃນຍຸທະສົງຄາມລືຊາປະກົດຕ່າງໆ,ມີລາຍຊື່ກະສັດແລະວິລະຊົນອົງເອກຂອງຊາດ, ມີທຸງໄຊສະເຫຼີມພົນທີ່ຜ່ານສະໜາມລົບອົງອາດຊ່າເຊັ່ງກຶກກ້ອງໃນຍຸກສະໄໝຕ່າງໆ.

7. ຍອດຊໍ່ຟ້າ. ຂຶ້ນຮອດຊັ້ນສຸດເປັນຫຼັງຄາພຽງເປັນບ່ອນຕັ້ງຂອງຍອດຊໍ່ຟ້າ ຫ້າຍອດ ແຕ່ລະຍອດກໍ່ສ້າງຕາມສະຖາປັດຕະຍະສິນລາວ ເປັນຊໍ່ເປັນຊັ້ນເປັນຜາສາດລາຊະມົນທຽນມີຍອດປາຍແຫຼມຊີ້ຟ້າທ້າລົມມະພາກາດ. ຍອດຊໍ່ຟ້າ 4 ຍອດ ສູງທໍ່ກັນ, ຕັ້ງຢູ່ 4 ແຈຂອງຫຼັງຄາມີປ່ອງປະຕູຍອດລະໜຶ່ງປ່ອງຕໍ່ໃສ່ຫົວຂັ້ນໄດ 2 ຂັ້ນໄດ ແລະ ອູ່ໄຟຟ້າ 2 ອູ່ ເປັນທາງຂຶ້ນສູ່ຊັ້ນສຸດ. ຍອດຊໍ່ຟ້າຍອດທີ 5 ຕັ້ງຢູ່ໃຈກາງ, ໃຫຍ່ ແລະ ສູງກວ່າຍອດອື່ນ, ມີທາງຂຶ້ນສູ່ຫໍຄອຍອີກຊັ້ນໜຶ່ງ, ມີກ້ອງສ່ອງທາງໄກຕິດຕັ້ງຢູ່ ເພື່ອຮັບໃຊ້ຜູ້ຕ້ອງການຊົມທິວທັດຮອບດ້ານ ຂອງນະຄອນວຽງຈັນເບື້ອງບົນ.

ຍອດຊໍ່ຟ້າ 5 ຍອດ ມີຈິດໃຈເນື້ອໃນຄວາມໝາຍການເມືອງທີ່ເຈາະຈົງບົ່ງໝາຍເອົາຫຼັກ " ປັນຈະສີລາ " ເປັນແກ່ນການນຳຊີ້ວິກີທາງໃຫ້ແກ່ນັກການເມືອງໃນການປົກຄອງປະເທດໄພ່ຟ້າປະຊາກອນໃຫ້ຢູ່ເປັນເປັນສຸກ, ປາດສະຈາກໄພ, ທຸກ, ໂສກ, ອະຍຸຕິທຳ.... ແມ່ນຫຼັກ 5 ປະການຂອງການບໍລິຫານແຜ່ນດິນຕາມຫຼັກພຸດທະທຳສາຍກາງ, ປຸ່ງມດ້ວຍມິດໄມຕີ, ສີສັນ, ກຽດສັກສີຈະເລີນຮຸ່ງເຮືອງກາວອນ. ນັ້ນຄືຄວາມໝາຍທາງການເມືອງຂອງປະຕູໄຊ ອັນເປັນຄວາມໝາຍອີກຄວາມໝາຍໜຶ່ງ.

ອະນຸສາວະລີປະຕູໄຊແຫ່ງນີ້ ເມື່ອສ້າງເສັດລຽບລ້ອຍຈະມີນ້ຳໜັກລວມທັງໝົດປະມານຫົກພັນ ( 6000 ) ຕັນ ແລະຈະໃຊ້ງົບປະມານກໍ່ສ້າງປະມານຫົກສິບສາມ ( 63 ) ລ້ານກີບໃນສະໄໝນັ້ນ. ທັງນີ້ຕາມຕົວເລກຄຳນວນຂອງກົມກໍ່ສ້າງກອງທັບເປີງນັ້ນ.

ທັງໝົດທີ່ກ່າວເຫີງນີ້ລວມກັນ ລ້ວນແຕ່ເປັນຂໍ້ມູນຄວາມຈິງດ້ານສະຖາປັດຕະຍາສິນກໍ່ສ້າງ, ທັງບອກຄວາມໝາຍແລະປະໂຫຍດໃຊ້ການຂອງປະຕູໄຊ ແລະ ກໍ່ແມ່ນຂໍ້ມູນເງື່ອນໄຂລ້ວນທີ່ໄດ້ອະທິບາຍສູ່ຄະນະກຳມະການຟັງ ໃນວັນປະຊຸມພິຈາລະນາຕັດສິນຊີ້ຂາດໃຫ້ປະຕູໄຊ ໄດ້ຮັບລາງວັນຊະນະເລີດໃນການປະກວດແຂ່ງຂັນກັນທົ່ວພະລາຊະອານາຈັກ ໃນສະໄໝນັ້ນ.

# ພາກທີ III

# ການຈັດຕັ້ງ ແລະ ແຕ່ງຕັ້ງໜ້າທີ່ທາງລາຊະການໃນການກໍ່ສ້າງອະນຸສາວະລີ " ປະຕູໄຊ "

ຈາກຈິນຕະນາຍານລິເລີ່ມ ຂອງບຸກຄົນຜູ້ເປັນເຈົ້າການ, ຄວາມຄິດ ແລະ ແຜນການກໍ່ສ້າງອະນຸສາວະລີວິລະຊົນນິລະນາມ ກໍ່ໄດ້ຜັນຂະຫຍາຍຂຶ້ນເປັນກິດການທາງລາຊະການຂອງຊາດ, ຂອງແຜ່ນດິນ. ມີເອກະສານລາຊະການເປັນຂະບວນຫຼາຍສະບັບຢືນຢັນ ແລະ ກຳກັບຄວບຄຸມການກໍ່ສ້າງເລີ່ມແຕ່ວັນຕັ້ງຕົ້ນ ແລະ ຕໍ່ມາຕະຫຼອດ. ຈຳນວນໜຶ່ງຂອງເອກະສານທາງລາຊະການທີ່ລວບລວມໄດ້ມີດັ່ງນີ້ :

1. ຄຳສັ່ງລາຊະການເລກທີ 00624/ກສກ/41 ລົງວັນທີ 26 /2/1957, ຂອງຫົວໜ້າກົມເສນາທິການກາງກອງທັບ.

   ເລື່ອງ : ສະເໜີຮູບອະນຸສາວະລີ
2. ຈົດໝາຍຂອງລັດຖະມົນຕີຊ່ວຍວ່າການກະຊວງປ້ອງກັນປະເທດ ເລກທີ 1078/ປ.ທ.ຜ.ສ. ລົງວັນທີ 23/7/1959 ສົ່ງເຖິງຫົວໜ້າກົມໂຍທາທະຫານ ແລະ ຫົວໜ້າກົມສັນພາວຸດ ( ບຸທະສຳພາລະ ).

ເລື່ອງ : ການສ້າງອະນຸສາວະລີນັກຮົບເກົ່າ.

3. ຄວາມພິຈາລະນາຂອງພັນເອກ ທຳ ໄຊຍະສິດເສນາ ລົງວັນທີ 6/5/1967 ສະເໜີຕໍ່ລັດຖະມົນຕີກະຊວງປ້ອງກັນປະເທດຊຶ່ງເຫັນດີອະນຸມັດຕາມສະເໜີ.

ເລື່ອງ : ສະເໜີແຕ່ງຕັ້ງຄະນະກຳມະການສາມຄະນະເພື່ອບໍລິຫານ ແລະ ຄວບຄຸມການກໍ່ສ້າງອະນຸສາວະລີ.

ອັນມີ : – ກຳມະການກາງ ອະນຸສາວະລີ.
– ກຳມະການກຳກັບການເງິນ.
– ກຳມະການກຳກັບການກໍ່ສ້າງ.

4. ດຳລັດກະຊວງ ຂອງກະຊວງປ້ອງກັນປະເທດ, ເລກທີ 216/ປທ. ລົງວັນທີ 22/5/1967.

ເລື່ອງ : ແຕ່ງຕັ້ງຄະນະກຳມະການຂຶ້ນສາມຄະນະເພື່ອບໍລິຫານງານ ແລະ ຄວບຄຸມການກໍ່ສ້າງອະນຸສາວະລີ.

ຫຼັງຈາກການແຕ່ງຕັ້ງນັ້ນແລ້ວ ສາມຄະນະກຳມະການດັ່ງກ່າວໄດ້ເຄື່ອນໄຫວປະຕິບັດໜ້າທີ່ຮັບຜິດຊອບ, ຄືໄດ້ພິຈາລະນາຂຶ້ນແຜນການວາງຂໍ້ມູນ, ອັນເປັນເງື່ອນໄຂລະອຽດດ້ານສະຖາປັດຕະຍະກຳສິລະປະ ຕາມຫຼັກວິຊາການເຕັກນິກທັນສະໄໝ ຕື່ມຂຶ້ນອີກດັ່ງນີ້ຄື :

1. ຄຳນວນນ້ຳໜັກອັນເປັນບໍລິມາດທັງໝົດ ຂອງອະນຸສາວະລີ.

2. ວິໃຈຄົ້ນຄວ້າດ້ານທໍລະນີສາດພື້ນທີ່ດິນບ່ອນຈະສ້າງ.
3. ຄຳນວນຫາປະລິມານຄອນກຼີດທັງໝົດຂອງອະນຸສາວະລີ.
4. ຄັດເລືອກເອົາອູ່ໄຟຟ້າຂຶ້ນລົງແບບໜຶ່ງ ແລະ ວາງແຜນກໍ່ສ້າງຕິດຕັ້ງ.
5. ຮູບແຜນຜັງລະອຽດ ດ້ານສິລະປະປະດັບປະດາລວດລາຍ ແລະ ລາຍດອກ.
6. ຮູບແຜນກໍ່ສ້າງດ້ານຕັດຜ່າກາງ.
7. ຮູບແຜນຜັງເຈາະຫຼຸມ ເພື່ອຕອກເສົາເຂັມຄອນກຼີດຊີມັງ 16 ເສົາ ໃຫ້ສາມາດຮອງຮັບນ້ຳໜັກທັງໝົດຂອງອະນຸສາວະລີທີ່ຄຳນວນໄດ້ 6000 ໂຕນ.
8. ຮູບແຜນຜັງຄານຄອນກຼີດ ( ຂາງ ) ເພື່ອກໍ່ຕັ້ງຕີນກຳແພງຝາພະນັງທຸກດ້ານ.
9. ຮູບແຜນຜັງສ້າງອຸໂມງ ແລະ ຂັ້ນໄດຂຶ້ນ.
10. ຮູບແຜນຜັງຕິດຕັ້ງສາຍໄຟ, ເຄື່ອງຈັກ ແລະ ດອກໄຟປະດັບ.

ງົບປະມານການໃຊ້ຈ່າຍ ໃນການກໍ່ສ້າງອະນຸສາວະລີໃຫ້ແລ້ວເສັດທຸກສ່ວນຕັ້ງໄວ້ປະມານ 63,000,000 ( ຫົກສິບສາມລ້ານກີບ ) ເງິນກີບເວລານັ້ນມີຄ່າສູງ ທຽບໃສ່ເງິນດອນລາສະຫະລັດອະເມລິກາແມ່ນ 1 ດອນລາຕໍ່ 35 ກີບ.

ບັນຫາການເງິນມີການຝືດເຄືອງ ແລະ ສັບສົນສົມຄວນ ເພາະວ່າອະນຸສາວະລີ ມີລັກສະນະເປັນທັງຂອງລັດແລະຂອງມະຫາຊົນລວມກັນ. ເງິນສ່ວນໜຶ່ງມາຈາກມະຫາຊົນ. ຈຶ່ງມີ

24/VII ຫ້າມຈຳໜ່າຍ

ການຈັດຕັ້ງແບບມະຫາຊົນ ເພື່ອຫາເງິນລາຍໄດ້ເຂົ້າສົມທົບກັນ ເມື່ອການເງິນບໍ່ສະດວກການກໍ່ສ້າງກໍ່ບໍ່ສະດວກດຳເນີນໄປແບບບໍ່ສືບເນື່ອງ, ເລີ່ມຕົ້ນແຕ່ປີ 1957 – ປີ 1960 ມີລັດຖະປະຫານເກີດຂຶ້ນມີຜົນໃຫ້ການກໍ່ສ້າງຢຸດເຊົາຫຼາຍປີ. ຮອດປີ 1966 1967 ຈຶ່ງໄດ້ເອົາຈິງເອົາຈັງຄືນໃໝ່.

ການກຳນົດເວລາໃນການກໍ່ສ້າງ ຈຶ່ງບໍ່ສາມາດກຳນົດໄດ້ແນ່ນອນ. ຈົນກະທັ້ງເວລານີ້ກໍ່ຍັງບໍ່ແລ້ວໝົດທຸກພາກສ່ວນ, ຄົງຍັງເຫຼືອບໍ່ແລ້ວອີກປະມານ 10% ( ສິບເປີເຊັນ ) ສ່ວນທີ່ແລ້ວເສັດໄປເປັນໂຄງໃຫຍ່ປະມານ 90% (ເກົ້າສິບເປີເຊັນ).

ອັນຄວາມຮັບຜິດຊອບຈຳເພາະ ຂອງກົມກໍ່ສ້າງກອງທັບນັ້ນແມ່ນສະເພາະອອກແບບແຜນຜັງ ດ້ານວິຊາການເຕັກນິກສາກົນ ເພື່ອເຫຼືອມຄອນກູີດເສີມເຫຼັກໃຫ້ໄດ້ຕາມຂະໜາດຕາມແບບເພດຊີງຊື່ງຮູບແຜນຜັງ ແລະ ຫຸ່ນຈຳລອງທີ່ຊະນະເລີດໄດ້ກຳນົດແລະ ຈຳກັດໄວ້ລະອຽດກີ່ກ້ວນລຽບລ້ອຍແລ້ວທຸກພາກສ່ວນລວມທັງລາຍດອກປະດັບປະດາດ້ວຍ. ຕໍ່ຈາກນັ້ນກໍ່ແມ່ນທຳການກໍ່ສ້າງຕາມໜ້າທີ່ ແລະ ຕາມຮູບແຜນຜັງ.

ເອກະສານທຫຼາຊະການບົ່ງບອກວ່າ ໃນທຸກໄລຍະການກໍ່ສ້າງຍັງມີພັນເອກ ທຳ ໄຊຍະສິດເສນາ ເປັນຜູ້ຕິດຕາມຄວບຄຸມກຳກັບຊີ້ນຳ ເພື່ອໃຫ້ໄດ້ຕາມແບບທີ່ກຳນົດ.

ໃນການປະດັບປະດາດ້ວຍລວດລາຍ ສິລະປະອັນວິຈິດງົດງາມນັ້ນ ຍ່ອມຈະລືມນາຍຊ່າງດ້ານວິຈິດສິນຜູ້ມີພອນສະຫວັນຜູ້ໜຶ່ງບໍ່ໄດ້, ຜູ້ນັ້ນຄື : ທ້າວ ຈັນມີ ຫຼື ທ້າວ ຊຳນານ (ຊື

ໃໝ່ ). ຊຶ່ງປະຕິບັດໜ້າທີ່ພາຍໃຕ້ການຄວບຄຸມແນະນຳຢ່າງໃກ້ສິດຂອງພັນເອກ ທຳ ໄຊຍະສິດເສນາ.

ນອກຈາກນັ້ນ ການກໍ່ສ້າງຍັງໄດ້ລະດົມເອົາແຮງງານມະຫາຊົນຫຼາຍສິບຄວນອັນມີຊ່າງວິຈິດສິນ ຊ່າງແຕ້ມ ຊ່າງຂວັດຊ່າງກໍ່ສ້າງສະຖາປັດຕະຍາກຳ.... ຈາກຊົນຊັ້ນຊົນເຜົ່າຜູ້ຊຳນິຊຳນານມີສີມືປານິດ ລະອຽດມີຫົວຄິດປະດິດສ້າງມີປະສົບການຍາວນານເຂົ້າຊ່ອຍປະສົມປະສານວຽກງານ ຕະຫຼອດເວລາໃນໄລຍະລັດຖະບານປະສົມສາມຝ່າຍ ອັນໝາຍເຖິງການລວມລາວເພື່ອສັນຕິພາບ ແລະ ສາມັກຄີປອງດອງຊາດ. ລວມແລ້ວແມ່ນມີລັກສະນະມະຫາຊົນກວ້າງຂວາງທົ່ວປະເທດ.

ໃໝ່ໆ ນີ້ຄື ວັນທີ 22 ພຶດສະພາ 1995 ກະຊວງກະແຫຼງຂ່າວແລະ ວັດທະນາທຳດ້ວຍຄວາມສະຫຼາດສ່ອງໃສເຫັນການໄກ ໄດ້ອອກແຈ້ງການສະບັບໜຶ່ງໝາຍເລກທີ 637/ຖ.ວ. ກ່ຽວກັບປະຕູໄຊ ຊຶ່ງເນື້ອໃນລະອຽດຄົບຖ້ວນມີດັ່ງນີ້ :

# ແຈ້ງການ

ເລກທີ 637/ກ.ວ

ເຖິງ : ບັນດາກະຊວງ, ອົງການທຽບເທົ່າ, ກຳແພງນະຄອນ, ແຂວງຕ່າງໆແລະ ເຂດພິເສດໃນທົ່ວປະເທດ.

ອີງຕາມດຳລັດຂອງລັດຖະມົນຕີສະບັບເລກທີ 174/ນຍ, ລົງວັນທີ 13/11/1993 ທີ່ຮັບຮອງເອົາບູຮານສະຖານ, ບາງ ຕົວເມືອງເກົ່າແກ່ ແລະ ຮ່ອງຮອຍປະຫວັດສາດຈຳນວນ 9 ແຫ່ງ ໃຫ້ເປັນມໍລະດົກຂອງຊາດ ແລະ ໃຫ້ກະຊວງຖະແຫຼງ ຂ່າວ ແລະ ວັດທະນາທຳສືບຕໍ່ຄົ້ນຄວ້າບູຮານສະຖານ ແລະ ຮ່ອງຮອຍປະຫວັດສາດຫຼາຍແຫ່ງຕື່ມອີກຂຶ້ນເປັນມໍລະດົກ ຂອງ ຊາດ ແລະ ຂອງທ້ອງຖິ່ນ.

ໂດຍເຫັນວ່າສິ່ງປຸກສ້າງເປັນລັກສະນະປະຕູໄຊ ( ຜ່ານ ມາເຄີຍເອີ້ນກັນວ່າ : ອະນຸສາວະລີ ) ທີ່ຕັ້ງຢູ່ສວນສາທາລະ ນະຕໍ່ໜ້າສຳນັກງານນາຍົກ ໃນປັດຈຸບັນເປັນສະຖານທີ່ແຫ່ງ ໜຶ່ງທີ່ສະສົມສີໄມ້ລາຍມືອັນມີຄ່າຂອງບັນດານາຍຊ່າງລາວ ຊຶ່ງ ຊາວນະຄອນຫຼວງວຽງຈັນ, ແຂກຄົນມາຈາກແຂວງຕ່າງໆແລະ ຊາວຕ່າງປະເທດມີຄວາມສົນໃຈຕໍ່ຊື່ອັນແທ້ຈິງ ຂອງສະຖານທີ່ ດັ່ງກ່າວ.

ກະຊວງຖະແຫຼງຂ່າວ ແລະວັດທະນະທຳຈຶ່ງຕົກລົງໃສ່ຊື່ ໃຫ້ສະຖານທີ່ ທີ່ກ່າວມານີ້ວ່າ : " ປະຕູໄຊ " ນັບແຕ່ນີ້

ອອກແຈ້ງການນີ້ເປັນຕົ້ນໄປ. ສາເຫດທີ່ພາໃຫ້ໃສ່ຊື່ວ່າ ປະຕູໄຊ ເນື່ອງຈາກວ່າ ຮູບລັກສະນະຂອງສິ່ງປຸກສ້າງນັ້ນແມ່ນປະຕູໄຊຄື ຊາວໂລກເຂົາເຄີຍສ້າງມາ. ພິເສດສະການທີ່ແຫ່ງນີ້ໄດ້ເປັນປະ ຕູຜ່ານໄປເຕົ້າໂຮມແຫ່ຂະບວນກັນຢູ່ເດີ່ນພະທາດຫຼວງ ເພື່ອ ຍຶດອຳນາດໃນວັນທີ 23/8/1975 ຂອງຊາວນະຄອນຫຼວງ ວຽງຈັນ ແລະ ທັງເປັນປະຕູຜ່ານຂອງຊາວນະຄອນຫຼວງວຽງ ຈັນ ແລະ ຕົວແທນຂອງເຂດແຂວງຕ່າງໆ ໃນທົ່ວປະເທດໄປ ເຕົ້າໂຮມກັນຢູ່ເດີ່ນພະທາດຫຼວງເພື່ອສະເຫຼີມສະຫຼອງໄຊຊະນະ ຂອງການຍຶດອຳນາດໃນທົ່ວປະເທດ ແລະ ສະຖາປະນາສາທາ ລະນະລັດ ປະຊາທິປະໄຕ ປະຊາຊົນລາວ ຂຶ້ນຢ່າງມີໄຊນັບແຕ່ ວັນທີ 2 ທັນວາ 1975 ເປັນຕົ້ນມາ.

ດ້ວຍເຫດນີ້ຈຶ່ງແຈ້ງມາຍັງບັນດາກະຊວງ, ອົງການທຽບ ເທົ່າກຳແພງນະຄອນວຽງຈັນ, ແຂວງຕ່າງໆ ແລະເຂດພິເສດ ໃນທົ່ວປະເທດຈົ່ງຮັບຮູ້ ແລະ ເຜີຍແຜ່ໃຫ້ພະນັກງານ – ລັດ ຖະກອນ, ທະຫານ, ຕຳຫຼວດ ແລະ ປະຊາຊົນທີ່ຢູ່ໃນຂົງເຂດ ຫຼື ທ້ອງຖິ່ນຕົນໄດ້ຮັບຊາບຢ່າງທົ່ວເຖິງຕາມນີ້ດ້ວຍ.

ວຽງຈັນ, ວັນທີ 22 ພຶດສະພາ 1995

ລັດຖະມົນຕີກະຊວງຖະແຫຼງຂ່າວແລະວັດທະນະທຳ.

ຈະຢ່າງໃດກໍ່ຕາມ, ໂດຍທົ່ວໄປແລ້ວທຸກວັນນີ້, ສະພາບແພດຊີງ, ຊວດຊີງ, ລວດລາຍ, ລາຍດອກປະດັບປະດາ ແລະອື່ນໆ, ເມື່ອເບິ່ງສ່ວນໃຫຍ່ຈາກພາຍນອກກໍ່ເຫັນໄດ້ຄືວ່າແລ້ວເສັດລຽບລ້ອຍໄປແລ້ວ, ເປັນອະນຸສອນສະຖານປາກົດແກ່ຕາຜູ້ຊົມ ແລະ ນັກທ່ອງທ່ຽວຢ່າງອົງອາດທະນົງສີ, ວິດວາມເປັນເອກະລັກຂອງລາວ, ຈະຫາບ່ອນອື່ນໃດມາປຽບປານໄດ້ຍາກ. ກາຍເປັນຄ້າຍຄືດວງມະນີອີກດວງໜຶ່ງ ເອ້ປະດັບປະດານະຄອນຫານີແຫ່ງນີ້, ບໍ່ນ້ອຍໜ້າຕໍ່າຕາແກ່ນະຄອນຫຼວງອື່ນໃດໃນຊີກໂລກສ່ວນນີ້, ເປັນຂອງຂວັນເປັນມໍລະດົກສືບຕໍ່ໄປ.

ແລະແຕ່ປີ 1969 ເປັນຕົ້ນມາ ການເດີນຂະບວນສວນສະໜາມເປັນທາງການເນື່ອງໃນວັນບຸນຕ່າງໆ ໃຕ້ລະບອບລາຊາທິປະໄຕສະໄໝນັ້ນ ກໍ່ໄດ້ແຫ່ແຫນເປັນແຖວຍາວຢຶດລອດກ້ອງປະຕູໄຊແຫ່ງນີ້ໄປ ແລະ ດັ່ງແຈ້ງການຂອງທ່ານລັດຖະມົນຕີກະແຫຼງຂ່າວ ແລະ ວັດທະນະທໍາໄດ້ກ່າວໄວ້, ຂະບວນມວນຊົນເພື່ອຍຶດອໍານາດຢູ່ວຽງຈັນໃນວັນທີ 23/8/1975, ຂະບວນຊາວນະຄອນວຽງຈັນ ແລະ ຕົວແທນປະຊາຊົນເຂດແຂວງຕ່າງໆ ທົ່ວປະເທດເພື່ອສະຫຼອງໄຊຊະນະແຫ່ງການສະຖາປະນາ ສ.ປ.ປ.ລາວ ກໍ່ລ້ວນແຕ່ໄດ້ເດີນຜ່ານປະຕູໄຊນີ້ໄປ. ຈົນມາຮອດປີ 1976 ການສວນສະໜາມຈຶ່ງປ່ຽນບ່ອນໄປກະທໍາຢູ່ເດີ່ນທາດຫຼວງ ຕໍ່ໜ້າອະນຸສາວະລີນັກຮົບນິລະນາມແຫ່ງໃໝ່ທີ່ພັກ ແລະ ລັດເຮົາໄດ້ສ້າງຂຶ້ນ.

ປະຕູໄຊກາຍເປັນສູນທ່ອງທ່ຽວນິຍົມຊົມ ອີກແຫ່ງໜຶ່ງຂອງ

ລາວ, ດູດດຶງເອົາລາຍໄດ້ເຂົ້າປະເທດໄດ້ສ່ວນໜຶ່ງ. ນັກທ່ອງທ່ຽວ, ກ່ອນຈະເຂົ້າເຖິງພະທາດຫຼວງ ແລະ ອະນຸສາວະລີພະບາດສົມເດັດພະເຈົ້າໄຊເຊດຖາມະຫາລາຊາ ທີ່ເດີນທາງຂ້າມຂົວແມ່ນ້ຳຂອງມາ, ທຸກຄົນແມ່ນໄດ້ແວະຊົມປະຕູໄຊຢ່າງອີ່ມໃຈກ່ອນ, ແລ້ວຈຶ່ງເດີນໜ້າກາຍໄປສູ່ພະທາດຫຼວງ. ຮູບແລະກິຕິສັກຂອງປະຕູໄຊໄດ້ແຜ່ກະຈາຍໄປກວ້າງຂວາງທົ່ວໂລກ, ເປັນກຽດແລະສັກສີຂອງມະຫາຊົນຊາວລາວທຸກຄົນ ທີ່ເປັນເຈົ້າຂອງລວມກັນໄປແລ້ວ. ແມ່ນຄວາມພາກພູມໃຈ ແລະ ຊື່ນຊົມອວດອົ່ງຊົງສີຂອງລາວເຮົາທຸກຄົນ.

# ພາກທີ IV
## ທັດສະນະຂອງຕ່າງປະເທດຕໍ່ປະຕູໄຊ

ກ່ອນອື່ນໝົດຂໍອະນຸຍາດເຊີນເອົາວາທະໂວຫານ ຂອງນັກການເມືອງສຳຄັນຜູ້ໜຶ່ງຂອງປະເທດໄທມາອ້າງ. ທ່ານຜູ້ນັ້ນໃນການະເປັນນາຍົກລັດຖະມົນຕີ ໄດ້ເດີນທາງມາຢ້ຽມຢາມສັນທະວະໄມຕີລາຊະອານາຈັກລາວເມື່ອກ່ອນຢ່າງເປັນທາງການ. ເມື່ອກັບຄືນໄປເຖິງກຸງເທບມະຫານະຄອນ, ໄດ້ຂຽນບົດຄວາມຊົມເຊີຍຍໍຍ້ອງປະຕູໄຊຂອງລາວລົງໃນໜັງສືພິມ " ໄທລັດ " ວ່າ : " ອານຸສາວະລີປະຕູໄຊທີ່ວຽງຈັນ ເປັນໜຶ່ງບໍ່ມີສອງໃນພາກຕາເວັນອອກສ່ຽງເໜືອຂອງເອເຊຍ ". ເປັນການຕີລາຄາສູງຍິ່ງໃຫ້ແກ່ອານຸສາວະລີແຫ່ງນີ້, ເປັນການໃຫ້ຄວາມສຳຄັນເດັ່ນແກ່ສະຖາປັດຕະຍະສິນລາວ, ເປັນການໃຫ້ກຽດຍໍຍ້ອງແກ່ຜູ້ລິເລີ່ມອອກແບບ ແລະ ຜູ້ກໍ່ສ້າງ ແລະ ແກ່ລາວທັງຊາດທີ່ໜ້າພາກພູມໃຈ.

ຕໍ່ຈາກນັ້ນ, ຂໍຖອດເອົາບົດຂຽນບາງຕອນຂອງນັກຂຽນອັງກິດ ແລະ ອາເມລິກັນ ຈາກໜັງສືພິມ " ຊັນເດມາກາຊີນ " (ຂອງ " ບັງກອກໂປສຕ໌ " ເຫຼັ້ມ 28, ເລກທີ 53, ອອກວັນທີ 23 ກຸມພາ 1969 ) ມາໃຫ້ອ່ານດັ່ງນີ້ :

– " ເຖິງຢ່າງໃດກໍ່ຕາມ, ແຕ່ລະຊາດກໍ່ຕ້ອງມີອານຸສອນສະຖານຂອງຕົນເອງໄວ້ສະກິດເຕືອນໃຈ ແລະ ອານຸສາວະລີ

ປະຕູໄຊທີ່ອຸທິດແກ່ຜູ້ທີ່ເສຍສະລະຊີວິດແຫ່ງນີ້.... ກໍ່ມີຂື້ນແລ້ວໃນນະຄອນຫຼວງວຽງຈັນ, ເພື່ອສະກົດສະກຽນຢູ່ຢືນນານສືບໄປ, ແມ່ນວ່າຄົນທັງຫຼາຍຈະມັກ ຫຼື ບໍ່ມັກມັນກໍ່ຕາມ ".

– " ເວົ້າໃນຂັ້ນພື້ນການ ການສານປະສົມເອົາລິວລາຍລາວເຂົ້າກັບລາຍລິວຕ່າງປະເທດຄັ້ງນີ້ ກໍ່ໄດ້ທຳໃຫ້ໂຄງສ້າງອະນຸສາວະລີນີ້ມີຄວາມງາມເປັນສະເໜ່, ທີ່ລ່ວງເກີນກາຍຄົນອື່ນແນວໃດແນວໜຶ່ງຢູ່ ແລະ ກໍ່ສະທ້ອນໄດ້ຢ່າງກົກຕ້ອງຄັກແນ່ໃຫ້ເຫັນການສັງເຄາະເຂົ້າກັນໄດ້ ຂອງບັນດາທາດແທ້ຕ່າງປະເທດກັບທາດແທ້ດັ່ງເດີມຂອງທ້ອງກິ່ນພື້ນເມືອງລາວ ຊຶ່ງຜູ້ໃດກໍ່ເຫັນປະຈັກແກ່ສາຍຕາຢູ່ແລ້ວໃນການວິວັດວັດທະນາທຳ ຂອງລາວສະໄໝນີ້. ການສັງເຄາະເຂົ້າກັນນີ້ ຫາກແມ່ນຈະຍັງບໍ່ອາດຮາບຮຽບນີ້ມນວນດີເທື່ອ, ແຕ່ຢາກເວົ້າຢ່າງມີຄວາມຫວັງວ່າອັນວ່າການສຸກຕຶງຕັນເຕັມນັ້ນ ກໍ່ຍອມຈະເກີດຂື້ນລຸນຫຼັງການແກ່ເຫຶມເປັນທຳມະດາ. ໃນທັດສະນະຂອງຂ້າພະເຈົ້າ, ອານຸສາວະລີນີ້ແມ່ນເປັນຂອງຮັບເອົາໄດ້. ມັນໄກກັນຫຼາຍຍິ່ງກວ່າບັນດາແບບແຜນຜັງທັງຫຼາຍ ທີ່ໄດ້ກໍ່ສ້າງສຳເລັດມາແລ້ວຫຼາຍຕໍ່ຫຼາຍກ່ອນມັນ....

– " ເຖິງຢ່າງໃດກໍ່ຕາມ, ອັນສະເໜ່ຄວາມງາມພິສະດານ ທີ່ເປັນເອກະລັກຄຸນສົມບັດ ຂອງອະນຸສາວະລີແຫ່ງນີ້ອາດສາມາດຂະຫຍາຍຍ້າຍຍັບຂື້ນເປັນບັນເຈີດເລີດລອຍໄດ້ ກ້າຫາກວ່າມັນກົກທາສີແຈ້ງສົດໃສສີໃດສີໜຶ່ງ, ຈະແມ່ນສີຂາວ ຫຼື ບໍ່ດັ່ງນັ້ນຈະແມ່ນສີປະສົມຂອງບັນດາແວວສີແສງອ່ອນໆ ທີ່ຈະທຳ

ໃຫ້ເກີດຜົນໃຫ້ມັນຄ້າຍຄືກັນກັບເນື້ອຫີນອ່ອນ. ລັກສະນະພາຍນອກແບບສີຂີ້ເກົ່າຂອງປະທາຍໃນປັດຈຸບັນຂອງມັນ ແມ່ນອື້ມຄື້ມ ( ບໍ່ຮຸ່ງເຮືອງເຫຼືອງເຫຼື້ອມປານໃດ ) ".

– " ການສານປະສົມຕາເວັນຕົກກັບຕາເວັນອອກເຂົ້າກັນ, ອັນມີທັງຝຼັ່ງ ທັງລາວ, ທັງເກັກ ( ເສົາກົມມົນຄໍ້າໜ້າມຸກເປັນປ່ອງປະຕູສີ່ປ່ອງຈຳນວນ 8 ເສົາ ), ທັງອິນເດຍ(ຍອດຊໍ່ຟ້າ 5 ຍອດ ແບບຕາດຊະມາຣາມຫີນອ່ອນ ສີຂາວປອດຢູ່ນະຄອນນິວແດນລີຂອງອິນເດຍ ) ອອກມາໃນຮູບໃໝ່ປະຢຸກ, ວິຈິດພິສະດານອົ່ງເອກ ສວຍງາມ, ທັງສະຫງ່າ, ທັງກ້າວໜ້າ, ວິວັດ, ວິຈິດສິນ, ແຕກຕ່າງກວ່າທຸກອາຄານທີ່ກໍ່ສ້າງມາກ່ອນໃນເມືອງລາວ .... ".

ທີ່ອ່ານມາເທິງນີ້ແມ່ນບົດຊຽນຂອງຊາວຕາເວັນຕົກທີ່ຍອມຮັບເອົາຄວາມສຳເລັດ ຂອງສິລະປະປັດຕະຍະກຳທີ່ວິຈິດງົດງາມ. ເປັນການໃຫ້ກຽດ ໃຫ້ຄວາມສຳຄັນລະອຽດເລິກແລບແກ່ຈິນຕະນະການບຸກເບີກ, ລິເລີ່ມຂອງຜູ້ອອກແບບກໍ່ສ້າງທີ່ຊະນະເລີດ, ຂອງຄວາມສຳເລັດທີ່ຍັງບໍ່ທັນແລ້ວບໍລິບູນທຸກສ່ວນ.

ຊາວປີຜ່ານໄປ ການກໍ່ສ້າງຍັງບໍ່ທັນໄດ້ສືບຕໍ່. ແຕ່ທີ່ເຫັນກັບຕາຢູ່ໃຈກາງກະໜົມລ້ານຊ້າງທຸກວັນນີ້ກໍ່ນັບໄດ້ວ່າເປັນສິ່ງປະດັບປະດານະຄອນຫຼວງຂອງລາວໄດ້, ບໍ່ນ້ອຍໜ້າຕໍ່າຕາຜູ້ໃດ, ກ້າວໜ້າກວ້າງໄກ, ທັນກັບຄວາມຕ້ອງການ, ທັນກັບການເວລາ, ທັນກັບສະພາບແວດລ້ອມຂອງສັງຄົມທີ່ຮຽກຮ້ອງຫາຂອງໃໝ່ທີ່ສວຍສົດງົດງາມ, ວິຈິດມີສະເໜຫາເລື້ອຍໄປ. ບັດນີ້ຊື່ສຽງ,

ຮູບ, ກິຕິສັກຂອງປະຕູໄຊໄດ້ແຜ່ກະຈາຍໄປທົ່ວເມືອງລາວ, ທົ່ວທຸກຂົງເຂດໃກ້ຄຽງ, ທົ່ວໂລກ; ໄດ້ຍົກຄວາມທະນົງອົງອາດ, ຄວາມພາກພູມໃຈ, ກຽດສັກສີກຶກກ້ອງ, ຄວາມວິຈິດງົດງາມມີສະເໜ່ລອຍເລີດໃຫ້ແກ່ທານີນະຄອນວຽງຈັນໄປແລ້ວ.

ການເຂົ້າກັນໄດ້ຢ່າງພິສະດານ ຂອງວິຈິດສິນຕາເວັນຕົກກັບຕາເວັນອອກອັນເປັນຂອງລາວໂດຍສະເພາະ, ການກືນເຂົ້າກັນໄດ້ສະນິດສະໜົມລະຫວ່າງຂອງເກົ່າກັບຂອງໃໝ່, ລະຫວ່າງສະຖາປັດຕະຍະສິນເກົ່າແກ່ດັ້ງເດີມ ( ກລາດສິກ ) ກັບສະຖາປັດຕະຍະສິນວິທະຍາສາດທັນສະໄໝ ລ້ວນແຕ່ແມ່ນຫຼັກການພິສູດສາທິດໃຫ້ເຫັນໄດ້ແຈ້ງຄວາມສາມາດ ຂອງຈິນຕະນາການອັນເປັນພອນສະຫວັນຂອງຜູ້ເປັນເຈົ້າການລິເລີ່ມອອກຫົວຄິດປະດິດສ້າງປະຕູໄຊແຫ່ງນີ້.

ບໍ່ງ່າຍປານໃດທີ່ຊາວຕາເວັນຕົກຈະຍອມຮັບນັບຖືເອົາ ສິ່ງໃດສິ່ງໜຶ່ງເທີດທູນໄວ້ສູງກວ່າສິ່ງໜຶ່ງສິ່ງໃດ ທີ່ພວກເຂົາເຈົ້າສ້າງສຳເລັດ. ນອກຈາກນັ້ນ ຜູ້ນຳຄົນສຳຄັນຜູ້ໜຶ່ງຂອງປະເທດຂ້າງຄຽງຊ້ຳຍັງໄດ້ຂຽນຂໍ້ຄວາມລົງໃນໜ້າໜັງສືພິມ ຍອມມອບຄວາມສຳຄັນ ແລະ ຄວາມວິຈິດມີສະເໜ່ລອຍເດັ່ນຂອງປະຕູໄຊດ້ວຍຄວາມເວົ້າອັນມີຄວາມເລິກແລບວ່າ : " ແມ່ນໜຶ່ງບໍ່ມີສອງໃນເອເຊຍຕາເວັນອອກສ່ຽງໃຕ້ ". ແປວ່າເດັ່ນກວ່າເພິ່ນບໍ່ມີບ່ອນໃດປຽບປານລືມກາຍໄດ້.

ນັ້ນແມ່ນຄວາມຮູ້ສຶກ ແລະຄວາມຄິດເຫັນຂອງຊາວຕ່າງປະເທດທີ່ເຊີດຊູໃຫ້ກຽດເລີດລອຍແກ່ປະຕູໄຊຂອງປະເທດເຮົາ.

24 / VII

# ພາກທີ V
# ປະຕູໄຊແມ່ນສິນບັດຂອງທົ່ວປວງຊົນ

ບັດນີ້ຫັນມາຫາລາວ ຜູ້ເປັນເຈົ້າຂອງປະຕູໄຊລວມກັນທັງຊາດ. ແນ່ນອນຜູ້ເປັນເຈົ້າຂອງ, ໃນການະເປັນເຈົ້າຂອງນັ້ນຍ່ອມມີຄວາມຮູ້ສຶກມີຄວາມຄິດຕ່າງໄປຈາກຊາວຕ່າງປະເທດ ຜູ້ບໍ່ເປັນເຈົ້າຂອງ. ຄວາມຮູ້ສຶກ ແລະ ຄວາມຄິດຂອງລາວຍ່ອມຝັງໃນໜັກແໜ້ນເລິກເຊິ່ງ, ປະດັບດ້ວຍຄວາມເອກອ້າງທະນົງໃຈ, ຄວາມພາກພູມອວດອົ່ງໃນໄຊຊະນະອັນເລີດລອຍ ຂອງສະກາປັດຕະຍະສິນລາວ, ຊຶ່ງຊາວຕາເວັນຕົກຍອມຮັບ ແລະ ຍໍຍົກຢ່າງອິດສະລະເສລີເກີງຂັ້ນຊຽນເປັນຂ່າວລົງໜັງສືພິມ ສະບັບພິເສດດ້ວຍອັກສອນສີແດງເຕັມໜ້າ.

ໜັງສືນິຕະຍະສານລາວທຸກສະບັບ ໂດຍສະເພາະກໍ່ແມ່ນໜັງສືໂຄສະນາຫາປະໂຫຍດ ແລະ ສົ່ງເສີມການທ່ອງທ່ຽວຕ່າງໄດ້ຖ່າຍຮູບເອົາປະຕູໄຊໃນລັກສະນະທິດທາງຕ່າງໆ ລົງໃສ່ໜ້າກະດາດປະດັບສີທຳມະຊາດວິຈິດງົດງາມ ຫຼື ແຕ້ມຮູບເປັນສະເໜ່ຊັກຊວນນັກທ່ອງທ່ຽວເຂົ້າມາຫຼວງຫຼາຍ. ໂທລະພາບທຸກຊ່ອງຂອງລາວໄດ້ເລືອກເອົາຮູບປະຕູໄຊ ກັດຈາກຮູບພະທາດຫຼວງຂອງລາວເຮົາເພື່ອໃຊ້ໃນລາຍການນັ້ນໆນີ້ໆເປັນປະຈຳວັນ.

ຊ່າງພາບອາຊີບ ແລະ ສະໝັກຫຼິ້ນຕ່າງພາກັນຖ່າຍພາບຖ່າຍວີດີໂອເອົາໄປຂາຍ ຫຼື ເປັນທີ່ລະລຶກສະເພາະຕົນ ແຜ່ກະຈາຍໄປທົ່ວທຸກສາລະທິດ.

ຝ່າຍສິລະປະວັດທະນະທຳ ແລະ ວັດຖຸບູຮານຂອງກະແພງນະຄອນວຽງຈັນທີ່ຂຶ້ນສັງກັດກະຊວງກະແຫຼງຂ່າວແລະວັດທະນະທຳກໍ່ບໍ່ໄດ້ລົດລະຕິດຕາມຮັກສາບູລະນະປ້ອງກັນ ປະຕູໄຊໃຫ້ປອດໄພກ້າວໜ້າ ເປັນສິມບັດອັນລ້ຳເລີດຂອງຊາດສືບໄປ. ໄດ້ປູກຫຍ້າພັນຍີ່ປຸ່ນເປັນສະໜາມຫຍ້າ, ໄດ້ປູກຕົ້ນໄມ້ ແລະດອກໄມ້ປະດັບຮອບດ້ານຊຽວສີສົດທຳມະຊາດຫຼາຍຫຼາກ, ໄດ້ຮັກສາຄວາມສະອາດເຮັດອະນາໄມປະຈຳວັນ ມີພະນັກງານຮັບຜິດຊອບລະບຽບການຢ້ຽມຊົມ, ຂາຍເຄື່ອງຂາຍຂອງທີ່ລະລຶກ ແລະເຄື່ອງຂອງຕ່າງໆ, ບໍລິການຕອບສະໜອງຄວາມຕ້ອງການຂອງແຂກຢ້ຽມຊົມ.

ບັດນີ້ປະຕູໄຊ ໄດ້ຜ່ານກາລະເວລາມາໄດ້ສາມສິບຫ້າປີ. ເຖິງແມ່ນຈະຍັງບໍ່ແລ້ວເສັດລຽບລ້ອຍທຸກພາກສ່ວນ ແຕ່ກໍ່ຄ້າຍຄືແລ້ວເສັດ..... ແລະ ໄດ້ຕັ້ງຕະຫງານຊານສະຫງ່າຢູ່ໃນກະໜົນລ້ານຊ້າງ, ສົ້ນໜຶ່ງມີຫໍຄຳ, ອີກສົ້ນໜຶ່ງທາງທິດຕາເວັນອອກ ມີພະທາດຫຼວງອັນເລື່ອງລື, ເຮັດໃຫ້ກະໜົນລ້ານຊ້າງຄ້າຍຄືກະໜົນ " ຊັງເອລີເຊ " ແຫ່ງກຸງປາຣີ ອັນລືຊາປາກົດ. ນັກຂຽນບາງຄົນຂຽນວ່າ : " ແມ່ນຍ້າຍເອົາກະໜົນ " ຊັງເອລີເຊ " ແຫ່ງກຸງປາຣີ ມາໄວ້ວຽງຈັນ. " ບາງຄົນຂຽນວ່າ : " ແມ່ນອາກເດີຕຣີຢອມຟ ແຫ່ງວຽງຈັນ ບໍ່ແມ່ນຢູ່ປາຣີ ".

ປະຕູໄຊ ໄດ້ເປັນອະນຸສອນສະຖານປັດຕະຍະສິນ, ຄ້າຍຄືອັນຍະມະນີດວງໜຶ່ງປະດັບນະຄອນຫຼວງ ຂອງລາວຢູ່ນະບັດນີ້. ເປັນໄປໄດ້ທີ່ອະນຸສອນສະຖານແຫ່ງນີ້, ໃນບາງຄັ້ງຄາວ, ອາດ

ຊວນໃຫ້ລຳລຶກເຖິງອາດີດຕະການ, ປາງສະໄໝພະເຈົ້າຂຸນບູລົມລາຊາທິຣາດ ແຫ່ງໜໍ່ກໍສັດຕົ້ນຕະກູນຂອງລາວພະອົງໜຶ່ງ ( ພະອົງມີໂອລົດ 7 ອົງ – ໄດ້ໃຫ້ໂອລົດທັງ 7 ດື່ມນ້ຳສັດສາບານໃຫ້ມີຄວາມຊື່ສັດຕໍ່ກັນທັງ 7 ອົງ ) ແລະ ປາງສະໄໝພະເຈົ້າຟ້າງຸ້ມມະຫາລາດ ແລະ ອື່ນໆ ອີກຫຼາຍສະໄໝສືບຕໍ່ກັນມາທີ່ມີວີລະກຳອັ່ງອາດກ້າຫານ, ເສຍສະຫຼະຊີວິດເພື່ອຊາດ ເພື່ອກູ້ເອກະລາດຂອງຊາດລາວໃຫ້ຢູ່ລອດປອດໄພ.

ເປັນໄປໄດ້ທີ່ດວງວິນຍານອັນກ້າກັນຂອງມະຫາວີລະບູລຸດຜູ້ມີພະຄຸນຍິ່ງໃຫຍ່ລ້ຳເລີດ ແລະ ມີນ້ຳໃຈຮັກຊາດແພງເຊື້ອອັນສູງສົ່ງເຫຼົ່ານັ້ນຈະມາສັງລວມກັນຢູ່ມະອະນຸສອນສະຖານແຫ່ງນີ້ ເພື່ອບັນຊາກະຊິບສັ່ງລູກລາວປຸກນີ້ ໃຫ້ມີສະຕິສາງສາມັກຄີຮັກທໍ່ຊື່ສັດຕໍ່ກັນ ລຳລຶກເຖິງນ້ຳສັດສາບານຂອງພໍ່ຂຸນບູລົມລາຊາມະຫາລາດທີ່ເຂດຢຳ, ໃຫ້ປະຄັບປະຄອງປ້ອງກັນໃຫ້ ປວງຊົນລາວທຸກເຜົ່າ ຢູ່ເປັນລາວລວມກັນບໍ່ແບ່ງແຍກແຕກກັນ, ບໍ່ທໍລະຍົດຫັກຫຼັງລາວດ້ວຍກັນ, ບໍ່ຄົບຄິດກັບຄົນຕ່າງດ້າວທ້າວຕ່າງແດນຂາຍຄວາມລັບ, ດັບສູນສິດຜົນປະໂຫຍດຂອງຊາດ, ບໍ່ຂາຍຊາດບໍ່ທຳລາຍຊາດ, ບໍ່ລັບສິນບາດຄາດສິນບົນບໍ່ສໍ້ລາດບັງຫຼວງ, ບໍ່ຍັກຍອກສໍ້ໂກງຊັບສິນບັດຂອງຊາດ ແລະຂອງປະຊາຊົນ; ໃຫ້ພໍ່ແມ່ລູກຫຼານລາວທຸກເຜົ່າແຕ່ເໜືອເຖິງໃຕ້ ແຕ່ກ້ຳຕາເວັນອອກເຖິງກ້ຳຕາເວັນຕົກ ສຳນຶກຝັງໃຈສະເໝີວ່າປະເທດຊາດລາວເຮົາຈະໝັ້ນຄົງຮັ່ງມີ, ກ້າວໜ້າສີວິໄລ ແລະ ເຂັ້ມແຂງ, ປະຊາຊົນລາວ ຈະມີຊີວິດການເປັນຢູ່ທີ່ອຸດົມສົມບູນ ແລະ ຜາ

ສກໄດ້ກໍ່ຕໍ່ເມື່ອລາວທັງຜອງມີຈິດໃຈຮັກຊາດ ເອກະລາດ ແລະ ກ້າວໜ້າ; ຕັດສິນໃຈຮ່ຳຮຽນສືບທອດເອົາມູນເຊື້ອດີເດັ່ນຂອງບັນພະບູລຸດ ແລະ ບຸກຄົນທີ່ກ້າວໜ້າເລີດລອຍຂອງຊາດ, ໄຝ່ສະແຫວງສຶກສາເພີ່ມພູນຄວາມຮູ້ ຄວາມສາມາດ ແລະ ຂະຫຍັນດຸໝັ່ນພາກພຽນອອກແຮງງານມັນສະໝອງ ແລະ ຮ່າງກາຍເພື່ອພັດທະນາວຽກງານ ແລະ ການຜະລິດ, ຮູ້ເສຍສະລະແຮງກາຍ ແຮງໃຈ ແລະ ຊັບສິນ ຕະຫຼອດເຖິງຊີວິດຂອງຕົນເອງຫາກຈຳເປັນ ເພື່ອຜົນປະໂຫຍດອັນສູງສົ່ງຂອງປະເທດຊາດ,ຂອງຄວາມກ້າວໜ້າເປັນທຳ ແລະ ຂອງພາລະກິດສ້າງສາພັດທະນາເສດຖະກິດສັງຄົມ. ໃຫ້ປະເທດຊາດລາວເຮົາ, ປະຊາຊົນບັນດາເຜົ່າເຮົາກ້າວຂຶ້ນທຽມທັນອາລິຍະປະເທດ.

ສະເພາະຜູ້ເປັນພະນັກງານລັດຖະກອນທີ່ກິນເງິນເດືອນທີ່ໄດ້ຈາກປະຊາຊົນນັ້ນ ກໍ່ຕ້ອງປະພຶດຕົນໃຫ້ຖືກຕ້ອງຕາມພາລະໜ້າທີ່ ທີ່ພັກລັດມອບໝາຍໃຫ້ ກ່າວຄືຕ້ອງບໍລິສຸດໃຈ ນັບຖືແລະປະຕິບັດລະບຽບກົດໝາຍຂອງຊາດຢ່າງເຂັ້ມງວດ, ຍຶດໝັ້ນໜຽວແໜ້ນໃນແນວທາງການນຳພາຂອງພັກ ແລະ ລັດເຮົາ, ຮັບໃຊ້ບໍລິການໃຫ້ປະໂຫຍດ ໃຫ້ຄວາມສະດວກແກ່ປະຊາຊົນ, ຫາກບໍ່ແມ່ນເພື່ອເປັນນາຍເປັນອາຍາສິດ ໃຊ້ອຳນາດອິດທິພົນກົດຂີ່ຂົ່ມເຫັງປະຊາຊົນ, ບໍ່ແມ່ນເພື່ອຍ້ອນຫຼັງກັບຄືນມາໂກງກິນປະຊາຊົນຊ້ຳອີກຕໍ່ໜຶ່ງ ແລະ ອື່ນໆອີກທີ່ເປັນການຝືນຕ້ານຕໍ່ລະບຽບກົດໝາຍ ແລະ ສິດຜົນປະໂຫຍດອັນສັກກະລະສູງສົ່ງຂອງຊາດ ຂອງປະຊາຊົນບັນດາເຜົ່າ.

ສຽງກະຊິບສັ່ງຈາກວິນຍານເຫຼົ່ານັ້ນ ໄດ້ຮຽກຮ້ອງບັນຊາໃຫ້ລາວເປັນລາວ ມີສາມັກຄີ ເພື່ອສ້າງສາພັດທະນາຮອບດ້ານໃຫ້ຊາດລາວກ້າວໜ້າສີວິໄລ ວັດທະນາຖາວອນ – ເປັນບ່ອນຢູ່ອາໄສທີ່ໃຫ້ຄວາມຮົ່ມເຢັນເປັນສຸກຢູ່ດີກິນດີຕະຫຼອດໄປ.

ປະຕູໄຊ ບໍ່ພຽງແຕ່ເປັນອະນຸສອນສະຖາປັດຕະຍະສິນທາງວັດຖຸອັນວິຈິດລອຍເລີດທໍ່ນັ້ນ ຫາກຍັງແມ່ນອະນຸສອນສະຖາບັນແຫ່ງອາລິຍະຍານອັນລ້ຳເລີດປະເສີດສິນອີກດ້ວຍ.

ປະຕູໄຊ ຈຶ່ງບໍ່ແມ່ນມີໄວ້ສະເພາະເພື່ອໃຫ້ຊາດລາວຊື່ນຊົມພາກພູມໃນຄວາມງາມສະຫງ່າອົງອາດ ຂອງມັນເທົ່ານັ້ນ, ຫາກຍັງເພື່ອສະກິດເຕືອນໃຈຄົນລາວທຸກເຜົ່າທັງຜອງໃຫ້ຈາລຶກເຖິງແລະສືບທອດຢ່າງດີເລີດ ເອົາມູນເຊື້ອທີ່ຍອດຍິ່ງຂອງບັນພະບູລຸດ, ມະຫາວິລະບູລຸດ ແລະ ວິລະຊົນຂອງລາວເຮົາບັນດາເຜົ່າທີ່ໄດ້ມີຄຸນງາມຄວາມດີອັນເລີດລ້ຳ ໃນປະຫວັດສາດແຫ່ງການປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດລາວອັນສຸດແສນສັກກະລະຂອງພວກເຮົາ.

ຢ່າງໃດກໍ່ດີບັດນີ້ ປະຕູໄຊ ໄດ້ຢືນຢູ່ຕໍ່ໜ້າພວກເຮົາແລ້ວ, ປະດັບດ້ວຍກຽດຕິສັກ – ສັກສີກວ້າງໄກ, ດ້ວຍຄວາມສະຫງ່າວິຈິດພາກພູມບັນເຈີດເລີດລອຍ ມີສະເໜ່ພິສະດານດູດດຶງໂນ້ມນ້າວຈິດໃຈໃຫ້ນິຍົມຊົມຊອບດີໃຈ, ເຊີດຊູສໍລະເສີນ, ມີທະນົງອົງອາດເອກອ້າງ, ໄດ້ເກີດ, ໄດ້ເປັນລິຂະສິດຂອງລາວແລ້ວທຸກຄົນ. ຈົ່ງພາກພູມພໍໃຈ, ເຕັມໃຈສະອອນສະອື້ນລວມກັນທຸກຄົນເກີດ!

# ປະຕູໄຊຍານມຸສະຕິ

ປະຕູໄຊຢືນໝັ້ນ　　　ເທຍລະຄາຄົງທີບ
ຍໍຢືນກຽດຊື່ກ້ອງ　　　ກວມພື້ນແຜ່ນທະພີ
ດ້ວຍບາລະມີມຸງ　　　ພາກພູມທະນົງເອ້
ເອ້ອວດ　ທຸງວົງເດືອນໄດ້　　　ຍອດຊໍ່ສະເຫຼີມສີ
ຍົດມາກມີມູນມາ　　　ແກ່ນສະເໜຫອມເຣົ້າ
ມ້າວມ່ວງຈິດໃຈໃຫ້　　　ໃສສີສະອອນຍິ່ງ
ວິລະກຳກາດກ້າວ　　　ຫານຫ້າວຜາບມານ
ຊາມໄຊ　ດິນລາວລວມໄດ້　　　ປິຕຸພູມຫ້າມຮໍ່
ຮໍ່ຮັກສາ　ເອກະລາດໄດ້　　　ທະນົງໝັ້ນຢູ່ຢືນ
ຕື່ນເກີດ ! ລຸກເກີດ ! ຊາວລາວ
ກ້າວບືນບຸກໄປ　ຊີ້ໄຊໄດ້ໃໝ່　ໃຫຍ່ຍິ່ງວັດທະນາ
ຊາດຈະເຮືອງ　ເມືອງຈະຮຸ່ງ　ຍ້ອນລາວມັ້ນຕື່ນຕົວ　ແທ້ມາ

ທ່ານ ທຳ ໄຊຍະສິດເສນາ

ອະນຸຍາດພິມເລກທີ 018/ ພທປ, 201295
ວັນທີ 20/12/1995
ພິມທີ່ວິສາຫະກິດການພິມຈຳໜ່າຍສຶກສາ
ພິມຄັ້ງທີ 1 ຈຳນວນ 5000 ຫົວ
ສະຫງວນລິກຂະສິດ